ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-16 ມັງກອນ 2026

ປີທີ 15 ສະບັບທີ 1049

ລາຍສັບປະດາ

## ສຸນທອນພິດສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ກ່າວປິດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ



-ຂໍ້ນ້ອມນະມັດສະການ ພະເຖຣານຸເຖຣະ,

- ຮຽນ: ຄະນະປະທານ,

- ບັນດາສະຫາຍຜູ້ແທນ ແລະ ແຂກ ທີ່ຮັກແພງ.

ນັບແຕ່ວັນທີ6 ມັງກອນ 2026 ເປັນຕົ້ນມາ, ທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດແລະປວງຊົນລາວ ມີຄວາມຍິນດີຊົມຊື່ນຫັນໜ້າເຂົ້າສູ່ກອງປະຊຸມໃຫຍ່ ແລະ ພ້ອມກັນຕິດຕາມຢ່າງຈິດຈໍ່ຕໍ່ການດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ເຊິ່ງແມ່ນເຫດການການເມືອງສຳຄັນອີກບັ້ນໜຶ່ງບັນທຶກໄວ້ໃນໜ້າປະຫວັດສາດຂອງພັກເຮົາ ກໍຄືຂອງຊາດເຮົາ.

ດ້ວຍຄວາມຮັບຜິດຊອບ

ອ່ານຕໍ່ໜ້າ 4

## ຄະນະບໍລິຫານງານສູນກາງພັກ ສະໄໝທີ XII ວາງກະຕ່າດອກໄມ້ຕໍ່ໜ້າຮູບປັ້ນທ່ານປະທານ ໄກສອນ ພົມວິຫານ



(ສພຊ)-ໃນບັນຍາກາດແຫ່ງຄວາມປິຕິຊົມຊື່ນແລະຊົມເຊີຍຜົນສຳເລັດອັນຈົບງາມຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ; ຕອນເຊົ້າວັນສຸກທີ 9 ມັງກອນນີ້, ສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ພ້ອມດ້ວຍຄະນະບໍລິຫານ

ອ່ານຕໍ່ໜ້າ 3



ແນວຄິດປະທານ

### ໄກສອນ ພົມວິຫານ

ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ໃນທຸກໆການຈັດຕັ້ງ ຈະແມ່ນການຈັດຕັ້ງໃດກໍຕາມ ຕ່າງກໍມີຜູ້ເປັນຫົວໜ້າ ແລະ ຜູ້ເປັນຫົວໜ້ານັ້ນ ຕ້ອງຮັບຜິດຊອບຕໍ່ການຈັດຕັ້ງຂອງຕົນ, ຈະໄປຖິ້ມຄວາມຜິດພາດໃສ່ໝູ່ຄະນະແມ່ນເປັນໄປບໍ່ໄດ້.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 186)

ຈິນຕະນາການໃໝ່ຊີ້ບອກວ່າ ປະຊາທິປະໄຕເປັນພື້ນຖານຂອງການລວມສູນ, ເມື່ອເປັນແນວນັ້ນ ຍິ່ງມີປະຊາທິປະໄຕກວ້າງຂວາງເທົ່າໃດ ກໍຍິ່ງເຮັດໃຫ້ການລວມສູນສູງນຳເທົ່ານັ້ນ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 186)

ດຳລົງຊີວິດຢູ່ໃນໝູ່ມະຫາຊົນ ຕ້ອງຮູ້ຄວາມນຶກຄິດຈິດໃຈຂອງມະຫາຊົນ, ຮູ້ໝົດທຸກສິ່ງທຸກຢ່າງ, ຕ້ອງເຂົ້າໃຈມະຫາຊົນ, ຕ້ອງຮູ້ເຂົ້າມະຫາຊົນ. ຜູ້ນຳພາ ຕ້ອງໄດ້ຮັບຄວາມເຊື່ອຖືຢ່າງຕາຍໃຈຈາກມະຫາຊົນ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 187)

ອ່ານຕໍ່ສະບັບໜ້າ

## ໂຮມຊຸມນຸມຊົມເຊີຍຜົນສຳເລັດກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ




(ສພຊ) - ພິທີໂຮມຊຸມນຸມໃຫຍ່ ຊົມເຊີຍຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ຈັດຂຶ້ນໃນວັນທີ 9 ມັງກອນ 2026 ໂດຍມີສະຫາຍ ທອງລຸນ ສີສຸລິດ ເລຂາ

ອ່ານຕໍ່ໜ້າ 4




## ຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ




ອ່ານຕໍ່ໜ້າ 5

## ສະແດງສິລະປະພິເສດ "ລາວ -ຫວຽດນາມ ບົດເພງແຫ່ງມິດຕະພາບ"



ອ່ານຕໍ່ໜ້າ 12

## ລາຍຊື່ຄະນະບໍລິຫານງານສູນກາງພັກ ສະໄໝທີ XII



(ສພຊ) - ຕອນບ່າຍວັນພະຫັດທີ 8 ມັງກອນ 2026, ໃນວາລະດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ, ສະຫາຍ ນາງ ສີໃສ ລືເດດມູນສອນ ກຳມະການກົມການເມືອງສູນກາງພັກ, ຄະນະ

ອ່ານຕໍ່ໜ້າ 11



ອາການ... (ໜ້າ 9)



ມີຜູ້ລົງທະບຽນ... (ໜ້າ 10)




ລະວັງ ... (ໜ້າ 12)

## ຊົມເຊີຍຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ຢ່າງສຸດໃຈ!

# ຜົນກອງປະຊຸມລັດຖະບານ ເປີດກວ້າງ ຄັ້ງທີ II ປະຈຳປີ 2025




(ສພຊ) - ຕອນແລງວັນທີ 13 ມັງກອນນີ້ ທີ່ຫໍປະຊຸມແຫ່ງຊາດ, ທ່ານ ສອນໄຊ ສິດພະໄຊ ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ໂຄສົກລັດຖະບານ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບຜົນກອງປະຊຸມລັດຖະ ບານເປີດກວ້າງ ຄັ້ງທີ II ປະຈຳປີ 2025 ເຊິ່ງທ່ານໃຫ້ຮູ້ວ່າ: ກອງປະຊຸມດັ່ງກ່າວໄດ້ໄຂຂຶ້ນໃນຕອນເຊົ້າວັນທີ 12 ແລະ ປິດລົງໃນຕອນບ່າຍວັນທີ 13 ມັງກອນ 2026 ທີ່ຫໍປະຊຸມແຫ່ງຊາດ ພາຍໃຕ້ການເປັນປະທານຂອງທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ, ມີບັນດາທ່ານຮອງນາຍົກລັດຖະມົນຕີ, ສະມາຊິກລັດຖະບານ, ປະທານຄະນະກຳມະການປົກຄອງນະຄອນຫຼວງວຽງຈັນ ແລະ ບັນດາປະທານ-ຮອງປະທານຄະນະກຳມະການປົກຄອງແຂວງທົ່ວປະເທດ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດທຽບເທົ່າກະຊວງ, ສະພາແຫ່ງຊາດ, ອົງການຕຸລາການ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງເຂົ້າຮ່ວມ; ກອງປະຊຸມຄັ້ງນີ້ ໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລື, ປະກອບຄຳເຫັນ ແລະ ພິຈາລະນາຮັບຮອງເອົາບັນດາຫົວຂໍ້ສຳຄັນຄື:

ວາລະທີ 1: ສະຫຼູບຕີລາຄາການຈັດຕັ້ງປະຕິບັດວຽກງານໃນຕະຫຼອດໄລຍະ 1 ສະໄໝຜ່ານມາ ແລະ ວຽກຈຸດສຸມພົ້ນເດັ່ນປີ2025ເຫັນວ່າ:ຕະຫຼອດໄລຍະ 5 ປີຜ່ານມາ ເຖິງສະພາບການພາກພື້ນ ແລະ ສາກົນ ມີການຜັນແປຢ່າງສະຫຼັບຊັບຊ້ອນ ໂດຍສະເພາະບັນຫາຂໍ້ຂັດແຍ້ງຕ່າງໆ, ການແຜ່ລະບາດຂອງພະຍາດ, ໄພທຳມະຊາດ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຕ່າງໆ ໄດ້ສົ່ງຜົນກະທົບຕໍ່ການຂະຫຍາຍຕົວຂອງເສດຖະກິດໂລກ ເວົ້າລວມ, ເວົ້າສະເພາະ ຕໍ່ການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາ ທັງທາງກົງ ແລະ ທາງອ້ອມ. ແຕ່ດ້ວຍຄວາມພະຍາຍາມ ແລະ ເອົາໃຈໃສ່ນຳພາ-ຊີ້ນຳຂອງກົມການເມືອງສູນກາງພັກ ແລະ ດ້ວຍຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງຂອງລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ສາມາດເຮັດໃຫ້ທົ່ວປະເທດ ສືບຕໍ່ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ເສດຖະກິດຂະຫຍາຍຕົວສະເລ່ຍ 4.24% (ປີ2025ຂະຫຍາຍຕົວ4.8%), ເກັບລາຍຮັບເຂົ້າງົບປະມານໄດ້ 252 ພັນຕື້ກີບ ເທົ່າກັບ 140% ຂອງແຜນການ 5 ປີ (ປີ 2025 ປະຕິບັດໄດ້ 75.4 ພັນຕື້ກີບ ເທົ່າກັບ 109% ຂອງແຜນການປີ), ແຜນລາຍຈ່າຍປະຕິບັດໄດ້ 244 ພັນຕື້ກີບ ເທົ່າກັບ 128% ຂອງແຜນການ 5 ປີ (ປີ 2025 ປະຕິບັດໄດ້ 59.6 ພັນຕື້ກີບ ເທົ່າກັບ 73% ຂອງແຜນການປີ), ການແກ້ໄຂໜີ້ສິນພາຍໃນ ແລະ ຕ່າງປະເທດ ສຳເລັດຕາມສັນຍາ ທັງຈຳກັດໄດ້ການກູ້ຢືມໃໝ່ທີ່ບໍ່ມີປະສິດທິຜົນ, ເຮັດໃຫ້ຄວາມກົດດັນດ້ານໜີ້ສິນສາທາລະນະ ຫຼຸດລົງເທື່ອລະກ້າວ, ພາບລັກຄວາມໜ້າເຊື່ອຖືດ້ານການເງິນຂອງປະເທດເຮົາ ດີຂຶ້ນເປັນກ້າວໆ; ການຄວບຄຸມລາຄາສິນຄ້າ ແລະ ອັດຕາເງິນເຟີ້ນັບມື້ດີຂຶ້ນ ເຊິ່ງໃນປີ 2023 ອັດຕາເງິນເຟີ້ບາງໄລຍະ ຢູ່ໃນລະດັບ 41% ແລະ ໃນເດືອນທັນວາ 2025 ຢູ່ໃນລະດັບ 5.6%, ຮອດປັດຈຸບັນ ຄັງສຳຮອງເງິນຕາຕ່າງປະເທດກຸ້ມການນຳເຂົ້າ 6.45 ເດືອນ ແລະ ລາຄາສິນຄ້າກໍບໍ່ເໜັງຕີງຫຼາຍ; ການຜະລິດເຂົ້າເປືອກ ສາມາດປະຕິບັດໄດ້ຕາມແຜນທີ່ກຳນົດໄວ້ ເຊິ່ງ 5 ປີ ໄດ້ 18.9 ລ້ານໂຕນ ສະເລ່ຍ 3.78 ລ້ານໂຕນ/ປີ; ການສົ່ງອອກຜົນຜະລິດກະສິກຳ 5 ປີ ໄດ້ 8 ພັນລ້ານກວ່າໂດລາ ລື່ນແຜນການ 35% (ປີ 2025 ສົ່ງອອກໄດ້ 1,737 ພັນລ້ານໂດລາ ລື່ນແຜນການ 15%); ສາມາດລະດົມທຶນທົ່ວສັງຄົມໄດ້ 387 ພັນຕື້ກີບ ເທົ່າກັບ 189% ຂອງແຜນການ 5 ປີ (ປີ 2025 ລະດົມໄດ້ 6.25 ພັນຕື້ກີບ ເທົ່າກັບ 100% ຂອງແຜນການປີ); ການລົງທຶນຈາກເອກະຊົນພາຍໃນ ແລະ ຈາກຕ່າງປະເທດ ປະຕິບັດໄດ້ 266 ພັນຕື້ກີບ ເທົ່າກັບ 266% ຂອງແຜນການ 5 ປີ; ການຜະລິດແຮ່ທາດລວມປະຕິບັດໄດ້ 169 ພັນຕື້ກີບ ເທົ່າກັບ 202% ຂອງແຜນການ 5 ປີ, ຈຳໜ່າຍແຮ່ທາດທັງພາຍໃນ ແລະ ຕ່າງປະເທດ ໄດ້ 13 ພັນລ້ານໂດລາ ເທົ່າກັບ 160% ຂອງແຜນການ 5 ປີ (ປີ 2025 ການຜະລິດແຮ່ທາດໄດ້ 44 ພັນຕື້ກີບ, ເທົ່າກັບ 129% ຂອງແຜນການ); ການຜະລິດພະລັງງານໄຟຟ້າ ໄດ້ 251 ພັນລ້ານກິໂລວັດໂມງເທົ່າກັບ 90.93% ຂອງແຜນການ 5 ປີ ຄິດເປັນມູນຄ່າ 263 ພັນຕື້ກີບ ເທົ່າກັບ 186% ຂອງແຜນການ 5 ປີ, ສົ່ງອອກກະແສໄຟຟ້າໄປຕ່າງປະເທດ ໄດ້ 195 ພັນລ້ານກິໂລວັດໂມງ ເທົ່າກັບ 152 % ຂອງແຜນການ 5 ປີ (ປີ 2025 ຜະລິດໄດ້ 56 ພັນລ້ານກິໂລວັດໂມງ ມູນຄ່າ 73 ພັນຕື້ກີບ); ໄດ້ສຸມໃສ່ປະຕິຮູບລັດວິສາຫະກິດ 32 ຫົວໜ່ວຍ, ໃນນີ້ ສຳເລັດ 10 ຫົວໜ່ວຍ ແລະ ສືບຕໍ່ປະຕິຮູບ 22 ຫົວໜ່ວຍ; ໄດ້ສຸມໃສ່ກໍ່ສ້າງ-ຍົກລະດັບ-ຟື້ນຟູ ແລະ ບູລະນະສ້ອມແປງພື້ນຖານໂຄງລ່າງຄົມມະນາຄົມຂົນສົ່ງໃນທົ່ວປະເທດ ຕາມຄວາມສາມາດຂອງງົບປະມານ,

ອ່ານຕໍ່ໜ້າ 8

# ກອງປະຊຸມສົ່ງເສີມບົດບາດແມ່ຍິງໃນເວທີການເມືອງ



(ສພຊ) - ກອງປະຊຸມສຳມະນາ ພາຍໃຕ້ຫົວຂໍ້ "ການສົ່ງເສີມບົດບາດແມ່ຍິງໃນເວທີການເມືອງໃຫ້ແກ່ສະມາຊິກສະພາແຫ່ງຊາດເພດຍິງ" ໄດ້ຈັດຂຶ້ນໃນວັນທີ 12-13 ມັງກອນ 2026 ທີ່ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ນາງ ທຸມມາລີ ວົງພະຈັນ ກຳມະການສູນກາງພັກ, ປະທານກຳມາທິການຍຸຕິທຳ ທັງເປັນປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ເພດຍິງ; ເປັນກຽດເຂົ້າຮ່ວມຍັງມີທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ (ສພຊ), ທ່ານນາງ ມາຕິນ ເທເຣີ (Martine Therer) ຜູ້ຕາງໜ້າອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ປະຈຳສປປລາວ, ສສຊ ເພດຍິງ ປະຈຳ 18 ເຂດເລືອກຕັ້ງທົ່ວປະເທດ, ຄະນະກົມ-ພະແນກເພດຍິງພາຍໃນ ສພຊ ແລະ ແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງກອງປະຊຸມສຳມະນາຄັ້ງນີ້ ແມ່ນການສະຫຼຸບຕີລາຄາການເຄື່ອນໄຫວຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ IX ຕະຫຼອດ 5 ປີຜ່ານມາ, ວາງແຜນການເຄື່ອນໄຫວ 5 ປີຕໍ່ໜ້າ, ຟັງການລາຍງານການເຄື່ອນໄຫວຂອງຄະນະ ສສຊ ເພດຍິງ ໃນເວທີພາກພື້ນ ແລະ ສາກົນ, ຟັງບົດຮຽນຂອງສາກົນໃນການກະກຽມໃຫ້ແກ່ເພດຍິງໃນການມີສ່ວນຮ່ວມໃນເວທີການເມືອງ.

ໃນກອງປະຊຸມສຳມະນາຄັ້ງນີ້, ປະທານກອງປະຊຸມໄດ້ລາຍງານການເຄື່ອນໄຫວຕ່າງປະເທດຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ ໃນໄລຍະທີ່ສະພາແຫ່ງຊາດລາວ ເປັນປະທານໄອປາ ຄັ້ງທີ 45 ໃນປີ 2024, ການເຄື່ອນໄຫວໃນເວທີໄອປາ ຕະຫຼອດ 5 ປີຜ່ານມາ, ສະເໜີບົດສະຫຼຸບ 5 ປີຜ່ານມາ ແລະ ແຜນການ 5 ປີຕໍ່ໜ້າ (2026-2030) ທັງມີການຖອດຖອນບົດຮຽນເພື່ອກະກຽມຄວາມພ້ອມໃຫ້ແກ່ເພດຍິງ ສູ່ການມີສ່ວນຮ່ວມທາງການເມືອງ ໂດຍສະເພາະແມ່ນການລົງສະໝັກ ແລະ ໄດ້ຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ເພື່ອໃຫ້ເພດຍິງມີຈຳນວນເພີ່ມຂຶ້ນບັນລຸຄາດໝາຍ ສສຊ ເພດຍິງ ໃຫ້ໄດ້ 30%.

ກອງປະຊຸມສຳມະນາຄັ້ງນີ້ ໄດ້ຮັບຟັງການໂອ້ລົມຈາກທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ການມີສ່ວນຮ່ວມຂອງສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ IX ຕະຫຼອດໄລຍະ 5 ປີຜ່ານມາ ທີ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃນການເປັນຕົວແທນເພດຍິງໃນເວທີການເມືອງຢູ່ພາຍໃນ ແລະ ພາກພື້ນ ໄດ້ເປັນຢ່າງດີ, ເວທີໄອປາ (ສະມາຊິກລັດຖະສະພາເພດຍິງບັນດາປະເທດອາຊຽນ); ພິເສດແມ່ນການເປັນເຈົ້າພາບຈັດກອງປະຊຸມໄອປາທີ່ສປປລາວປີ2024 ດ້ວຍຜົນສຳເລັດຈົບງາມ ແລະ ໃນປີ 2025, ສະມາຊິກສະພາແຫ່ງຊາດເພດຍິງ ໄດ້ມີມະຕິສະເໜີຕໍ່ກອງປະຊຸມໄອປາ ຄັ້ງທີ 46 ທີ່ຈັດຂຶ້ນທີ່ປະເທດມາເລເຊຍ ໃນເດືອນຕຸລາ 2025 ທີ່ຜ່ານມາ ທັງໝົດນີ້ ເຮັດໃຫ້ບົດບາດຂອງແມ່ຍິງລາວ ນັບມື້ສູງເດັ່ນຂຶ້ນໃນເວທີຂອງພາກພື້ນ ແລະ ສາກົນ.

ທ່ານຮອງປະທານແຫ່ງຊາດ ຍັງໄດ້ເນັ້ນຕື່ມບາງບັນຫາ ເຊັ່ນ: ການຊຸກຍູ້ໃຫ້ເອື້ອຍນ້ອງເພດຍິງ ມີການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຕ່ລະທ້ອງຖິ່ນກໍຄືຂອງຊາດ ເພື່ອແກ້ໄຂຄວາມທຸກຍາກ, ສ້າງວຽກເຮັດງານທຳໃຫ້ແມ່ຍິງ, ສ້າງເງື່ອນໄຂໃຫ້ແມ່ຍິງ ໄດ້ມີສ່ວນຮ່ວມຢ່າງເທົ່າທຽມກັບເພດຊາຍ, ໄດ້ມີສ່ວນຮ່ວມໃນການຕັດສິນບັນຫາສຳຄັນຂອງຊາດ; ສູ້ຊົນໃຫ້ແມ່ຍິງໄດ້ລົງສະໝັກຮັບເລືອກຕັ້ງໃຫ້ໄດ້ 35% ຂອງຈຳນວນຜູ້ລົງສະໝັກເພື່ອຮັບປະກັນໃຫ້ຈຳນວນຂອງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງທີ່ເປັນເພດຍິງບັນລຸ 30% ຂອງຈຳນວນສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ເຂົ້າຮ່ວມ ແລະ ສ້າງຂະບວນການສຶກສາອົບຮົມ, ປຸກລະດົມແມ່ຍິງໃນທຸກສາຂາອາຊີບ ຢູ່ສູນກາງ ແລະ ທ້ອງຖິ່ນ ເຂົ້າຮ່ວມການປະຕິບັດແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງລັດ; ເອົາໃຈໃສ່ພັດທະນາຕົນເອງໃນແຕ່ລະດ້ານ ໃນເງື່ອນໄຂທີ່ພວກເຮົາມີການເຊື່ອມໂຍງກັບສາກົນເປັນຕົ້ນ: ຄວາມຮູ້ພາສາຕ່າງປະເທດ, ກົດໝາຍສາກົນ, ໄອທີ ເຊິ່ງເປັນຄວາມຮູ້ພື້ນຖານໃນການເຄື່ອນໄຫວວຽກງານການຕ່າງປະເທດ ໂດຍສະເພາະແມ່ນການສ້າງໃຫ້ມີຄວາມຮູ້ດ້ານດິຈິຕອນ ຕາມທິດສ້າງສັງຄົມດິຈິຕອນ, ເສດຖະກິດດິຈິຕອນ ແລະ ອື່ນໆ ແລະ ໃນເງື່ອນໄຂທີ່ສະພາແຫ່ງຊາດຢູ່ໃນໄລຍະປັບປຸງກົງຈັກການຈັດຕັ້ງຂອງຕົນ, ໃຫ້ມີຄວາມອຸ່ນອຽນທຸ່ນທ່ຽງ, ບໍ່ຄອນແຄນ, ປະຕິບັດຕາມທິດປັບປຸງກົງຈັກໃຫ້ກະທັດຮັດ, ມີປະສິດທິຜົນ, ໂລ່ງລ່ຽນ, ມີຂຶ້ນມີລົງ, ມີເຂົ້າມີອອກ ເຊິ່ງບໍ່ຕ່າງຫຍັງກັບການປັບປຸງກົງຈັກໃນລັດຖະບານຜ່ານມາແລ້ວ.

ກອງປະຊຸມສຳມະນາຄັ້ງນີ້ ຍັງໄດ້ມີການແລກປ່ຽນຄຳຄິດເຫັນຂອງບັນດາ ສສຊ ເພດຍິງ ທີ່ເຂົ້າຮ່ວມກອງປະຊຸມ ໃນບັນຍາກາດຟົດຟື້ນກົງໄປກົງມາ.

**(ສອນສັກ ວັນວິໄຊ)**

# ຊຸກຍູ້ວຽກງານເລືອກຕັ້ງ ສສຊ ແລະ ສສຂ ຢູ່ຄຳມ່ວນ




(ສພຊ)-ວັນທີ 13-16 ມັງກອນນີ້, ທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ, ກຳມະການຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ), ຫົວໜ້າອະນຸກຳມະການເລຂານຸການ ແລະ ທ່ານ ດຣ. ນາງ ອິນລາວັນ ແກ້ວບຸນພັນ ຮອງປະທານສູນກາງແນວລາວສ້າງຊາດ, ກຳມະການ ຄລຊ, ກຳມະການອະນຸກຳມະການໂຄສະນາ ແລະ ປຸກລະດົມຂະບວນການ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມຊຸກຍູ້ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ຢູ່ແຂວງຄຳມ່ວນ ໂດຍການຕ້ອນຮັບ ແລະ ຮ່ວມເຮັດວຽກຂອງທ່ານ ວັນໄຊ ພອງສະຫວັນ ກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ປະທານຄະນະກວດກາສູນກາງພັກ, ເລຂາພັກແຂວງ, ປະທານຄະນະກຳມະການເລືອກຕັ້ງແຂວງ (ຄລຂ)ຄຳມ່ວນພ້ອມດ້ວຍບັນດາຄະນະກຳມະການ, ຫົວໜ້າ-ຮອງຫົວໜ້າອະນຸກຳມະການ ແລະກອງເລຂາຊ່ວຍວຽກຄລຂ ຄຳມ່ວນ ເຂົ້າຮ່ວມຢ່າງພ້ອມພຽງ; ຈຸດປະສົງກໍເພື່ອຕິດຕາມ, ຊຸກຍູ້ການກະກຽມວຽກງານດ້ານຕ່າງໆ ໃນການຮັບໃຊ້ວຽກງານການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ຊຸດທີ V ພາຍໃນແຂວງຄຳມ່ວນ ໃຫ້ສຳເລັດຕາມແຜນການທີ່ກຳນົດທັງເກັບກຳຄຳສະເໜີ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຕ່າງໆ ຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລະ ຂັ້ນເມືອງ ໃນການຈັດຕັ້ງປະຕິບັດມະຕິ, ຂໍ້ຕົກລົງ, ຄຳແນະນຳ ແລະ ແຈ້ງການ ຂອງຂັ້ນເທິງ ເພື່ອລາຍງານຄະນະກຳມະການເລືອກຕັ້ງລະດັບຊາດ.

ທ່ານບຸນມີພິມມະສອນ ປະທານສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການເລືອກຕັ້ງແຂວງຄຳມ່ວນໄດ້ລາຍງານການເຄື່ອນໄຫວວຽກງານບາດກ້າວທີ I ແລະ ແຜນການເຄື່ອນໄຫວວຽກງານບາດກ້າວທີ II ຂອງ ຄລຂ ຄຳມ່ວນ ເຊິ່ງທ່ານໃຫ້ຮູ້ວ່າ: ໃນການຈັດຕັ້ງປະຕິບັດວຽກງານບາດກ້າວທີ I ຄະນະກຳມະການເລືອກຕັ້ງຂັ້ນແຂວງ ໄດ້ສຳເລັດການສ້າງແຜນກະກຽມແລະດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງ ຊຸດທີ V; ປະກາດການແຕ່ງຕັ້ງຄະນະກຳມະການເລືອກຕັ້ງຂັ້ນແຂວງ. ສຳລັບແຜນການເຄື່ອນໄຫວວຽກງານບາດກ້າວທີ II ໃຫ້ສຳເລັດໃນອາທິດທີ 2 ຂອງເດືອນມັງກອນນີ້ເປັນຕົ້ນ: ການກະກຽມແລະດຳເນີນກອງປະຊຸມຂອງ ຄລຂ ເພື່ອສະຫຼຸບຕີລາຄາການເຄື່ອນໄຫວວຽກງານບາດກ້າວທີIແລະວາງແຜນຈັດຕັ້ງປະຕິບັດວຽກງານບາດກ້າວທີII, ປະກາດວັນເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V, ກຳນົດວັນປະກາດໃຫ້ສອດຄ່ອງຕາມມາດຕາ 33 ຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ປະກາດຈຳນວນຜູ້ສະໝັກຮັບເລືອກຕັ້ງ ແລະ ຈຳນວນ ສສຊ ຊຸດທີ X ແລະ ສສຂ ຊຸດທີ V; ສືບຕໍ່ປະສານສົມທົບຄະນະກຳມະການເລືອກຕັ້ງຂັ້ນເມືອງ (ຄລມ) ເພື່ອເກັບກຳແລະສັງລວມສະຖິຕິຈຳນວນຜູ້ມີສິດປ່ອນບັດເລືອກຕັ້ງທົ່ວແຂວງ; ຄົ້ນຄວ້າ, ຈັດສັນແບ່ງປັນ, ສະໜອງງົບປະມານ ແລະ ອຸປະກອນຮັບໃຊ້ໃນການເລືອກຕັ້ງ ໃຫ້ແກ່ ຄລມ; ພ້ອມທັງຕິດຕາມ, ຊຸກຍູ້ ແລະ ແນະນຳການຈັດສັນແບ່ງປັນ ໃຫ້ທັນຕາມກຳນົດເວລາ; ເຄື່ອນໄຫວຕິດຕາມ ແລະ ຊຸກຍູ້ໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງຈັດຕັ້ງການເຊື່ອມຊຶມແລະເຜີຍແຜ່ບັນດາເອກະສານສຳຄັນທີ່ກ່ຽວພັນກັບການເລືອກຕັ້ງ ໃຫ້ສຳເລັດໃນທ້າຍເດືອນມັງກອນ 2026; ຊີ້ນຳ ຄລມ ຄົ້ນຄວ້າຂຶ້ນບັນຊີລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນ ສສຂ ຊຸດທີ V ຕາມຄວາມຮັບຜິດຊອບຂອງຕົນ. ຈາກນັ້ນ, ໄດ້ມີການປະກອບຄຳເຫັນ ເພື່ອປຶກສາຫາລືແລກປ່ຽນເຖິງບັນຫາຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ແຜນການທີ່ຈະສືບຕໍ່ຈັດຕັ້ງປະຕິບັດ ເພື່ອກະກຽມຄວາມພ້ອມໃນດ້ານຕ່າງໆ ຮັບປະກັນເຮັດໃຫ້ບັ້ນເລືອກຕັ້ງຄັ້ງນີ້ໄດ້ຮັບການຈັດຕັ້ງປະຕິບັດໃຫ້ບັນລຸຜົນຕາມລະດັບຄາດໝາຍ.

ພ້ອມດຽວກັນ, ເພື່ອຮັບຟັງການກະກຽມໃຫ້ແກ່ການເລືອກຕັ້ງຈາກຄະນະກຳມະການເລືອກຕັ້ງຂັ້ນເມືອງ, ທ່ານ ດຣ. ນາງອິນລາວັນແກ້ວບຸນພັນຍັງໄດ້ລົງຊຸກຍູ້ວຽກງານການເລືອກຕັ້ງຢູ່ເມືອງທ່າແຂກ, ເມືອງໜອງບົກ ແລະ ເມືອງຫີນບູນ; ທ່ານ ຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າ, ກຳມະການອະນຸກຳມະການໂຄສະນາ ແລະ ປຸກລະດົມຂະບວນການ ໄດ້ລົງຊຸກຍູ້ວຽກງານເລືອກຕັ້ງຢູ່ເມືອງນາກາຍ, ເມືອງຍົມມະລາດ ແລະ ເມືອງມະຫາໄຊ; ທ່ານ ຈັນທະວົງ ແສນອາມາດ ມິນຕີ ຮອງປະທານກຳມາທິການການຕ່າງປະເທດ, ກຳມະການອະນຸກຳມະການເລຂານຸການ ໄດ້ລົງຊຸກຍູ້ວຽກງານເລືອກຕັ້ງຢູ່ເມືອງໄຊບົວທອງ ແລະ ເມືອງບົວລະພາ.





## ຄະນະ...

(ຕໍ່ຈາກໜ້າ 1)

ງານສູນກາງພັກ ສະໄໝທີ XII ໄດ້ນຳເອົາກະຕ່າດອກໄມ້ອັນສວຍສົດງົດງາມ ເຂົ້າວາງຕໍ່ໜ້າຮູບປັ້ນຫຼໍ່ຂອງປະທານ ໄກສອນ ພົມວິຫານ ທີ່ຫໍພິພິທະພັນ ໄກສອນ ພົມວິຫານ (ຫຼັກ6).

ການວາງກະຕ່າດອກໄມ້ໃນຄັ້ງນີ້, ກໍເພື່ອເປັນການເຄົາລົບຮັກ, ສະແດງຄວາມກະຕັນຍູຮູ້ບຸນຄຸນ, ລະນຶກເຖິງຄຸນງາມຄວາມດີອັນປະເສີດຂອງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກຂອງປວງຊົນລາວທັງຊາດ ທີ່ໄດ້ອຸທິດຊີວິດ, ສຸມທຸກສະຕິປັນຍາແລະຄວາມຮູ້ຄວາມສາມາດຂອງຕົນ ເຂົ້າໃນພາລະກິດປົດປ່ອຍຊາດກໍຄືພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ມີຄວາມຈະເລີນຮຸ່ງເຮືອງ, ມີຄວາມເຂັ້ມແຂງຕະຫຼອດມາ; ທັງນີ້ ກໍເພື່ອເປັນການລາຍງານສະເໜີຕົວຂອງບັນດາສະຫາຍໃນຄະນະບໍລິຫານງານສູນກາງພັກ ສະໄໝທີ XII ທີ່ໄດ້ຮັບການເລືອກຕັ້ງ ແລະ ຈະປະຕິບັດໜ້າທີ່ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃນອີກໜຶ່ງວາລະ 5 ປີ ຕໍ່ຈາກນີ້.

# ເຜີຍແຜ່ມະຕິກອງປະຊຸມໃຫຍ່ ຜູ້ແທນກຳມະບານລາວທົ່ວປະເທດ

(ສພຊ) - ຕອນສວາຍວັນສຸກທີ 9 ມັງກອນຜ່ານມາ, ສະຫະພັນກຳມະບານສະພາແຫ່ງຊາດ (ສກບສພຊ) ໄດ້ຈັດກອງປະຊຸມການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນກຳມະບານລາວທົ່ວປະເທດ ຄັ້ງທີ IX ໂດຍການເປັນປະທານຂອງທ່ານ ວຽງແກ້ວ ວັນນະຈັກ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ປະທານຄະນະບໍລິຫານງານ ສກບສພຊ ເຊິ່ງມີບັນດາທ່ານປະທານ-ຮອງປະທານ ແລະ ກຳມະການຂອງກຳມະບານຮາກຖານພາຍໃນ ສພຊ ເຂົ້າຮ່ວມຢ່າງພ້ອມພຽງ; ທັງນີ້, ກໍເພື່ອນຳເອົາເນື້ອໃນຈິດໃຈຂອງມະຕິກອງປະຊຸມໃຫຍ່ຜູ້ແທນກຳມະບານລາວທົ່ວປະເທດ ຄັ້ງທີ IX ໂດຍສະເພາະທິດທາງວຽກງານຈຸດສຸມແຕ່ລະດ້ານ (2026-2030) ນຳໄປຈັດຕັ້ງຜັນຂະຫຍາຍບັນດາເປົ້າໝາຍ, ແຜນວຽກຈຸດສຸມ ມາເປັນກິດຈະກຳ



ອັນລະອຽດ ແລະ ເປັນເຈົ້າການຄົ້ນຄວ້າ, ເຜີຍແຜ່, ເຊື່ອມຊຶມໃຫ້ແກ່ສະມາຊິກກຳມະບານ, ກຳມະກອນ ແລະ ຜູ້ອອກແຮງງານລາວບັນດາເຜົ່າ ໄດ້ຮັບຮູ້, ເຊື່ອມຊຶມ, ກຳແໜ້ນຢ່າງລະອຽດ, ກວ້າງຂວາງ, ເລິກເຊິ່ງ, ທົ່ວເຖິງ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ.

ທ່ານ ຄຳແທ່ນ ວິລະກຸນ ຮອງປະທານຄະນະບໍລິຫານງານສະຫະພັນກຳມະບານສະພາແຫ່ງຊາດ ໄດ້ຂຶ້ນເຜີຍແຜ່ບົດລາຍງານການເມືອງ, ມະຕິກອງປະຊຸມໃຫຍ່ຜູ້ແທນກຳມະບານລາວທົ່ວປະເທດ ຄັ້ງທີ IX ແລະ ບົດສະຫຼຸບແຜນ ພັດທະນາວຽກງານກຳມະບານ 5 ປີ ຄັ້ງທີ IV (2021-2025) ແລະ ທິດທາງແຜນພັດທະນາວຽກງານກຳມະບານ 5 ປີ ຄັ້ງທີ V (2026-2030) ຂອງສະຫະພັນກຳມະບານລາວ; ນອກນັ້ນ, ຍັງໄດ້ຮັບຟັງຄຳແນະນຳເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າຂອງສູນກາງສະຫະພັນກຳມະບານລາວ ສະໄໝທີ IX.

**(ກົງທະນູຄຳ ພິພັດເສລີ)**





## ໂຮມຊຸມນຸມ...

(ຕໍ່ຈາກໜ້າ 1)

ທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ບັນດາສະຫາຍກຳມະການກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ, ກຳມະການສູນກາງພັກສົມບູນ ແລະ ສຳຮອງ, ການນຳກະຊວງ, ອົງການທຽບເທົ່າຂັ້ນສູນກາງ, ການນຳນະຄອນຫຼວງວຽງຈັນ, ພະນັກງານ, ທະຫານ, ຕຳຫຼວດ, ພະເຖຣານຸເຖຣະ ແລະ ນັກຮຽນ-ນັກສຶກສາ ເຂົ້າຮ່ວມ ພ້ອມດ້ວຍການນຳບັນດາແຂວງໃນຂອບເຂດທົ່ວປະເທດ ທີ່ຮັບຊົມຜ່ານທາງຖ່າຍທອດສົດ.

ໃນພິທີ, ສະຫາຍ ອານຸພາບ ຕຸນາລົມ ເລຂາທິການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ໄດ້ກ່າວປາໄສໃນພິທີໂຮມຊຸມນຸມຄັ້ງນີ້ ວ່າ: ມື້ນີ້ ອົງຄະນະພັກ, ອົງການປົກຄອງແລະຊາວນະຄອນຫຼວງວຽງຈັນ ໄດ້ຕາງໜ້າປະຊາຊົນລາວໃນທົ່ວປະເທດ ມີຄວາມພາກພູມໃຈແລະເປັນກຽດຢ່າງສູງ ທີ່ໄດ້ຮັບກຽດຕາງໜ້າການນຳພັກ-ລັດຂັ້ນສູນກາງແລະຂັ້ນທ້ອງຖິ່ນ ເປັນເຈົ້າພາບຈັດງານໂຮມຊຸມນຸມໃຫຍ່ເພື່ອຊົມເຊີຍຜົນສຳເລັດອັນສະຫງ່າງາມຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ເຊິ່ງເປັນຜູ້ຈັດຕັ້ງນຳພາທຸກໄຊຊະນະຂອງການປະຕິວັດລາວ, ຖືໂອກາດນີ້ ພວກເຮົາພ້ອມກັນຂໍ່ານັບຊົມເຊີຍຜົນສຳເລັດຂອງກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ ຢ່າງສຸດອົກສຸດໃຈ. ໃນພິທີອັນມີຄວາມໝາຍນີ້, ພວກເຮົາສະແດງຄວາມອາໄລຮັກ ແລະ ຄວາມຮູ້ບຸນຄຸນຢ່າງໃຫຍ່ຫຼວງ ເຖິງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ເຄົາລົບຮັກ, ຜູ້ນຳພາກໍ່ຕັ້ງ ແລະ ນຳພາພັກເຮົາ ເຮັດສຳເລັດພາລະກິດປະຫວັດສາດປົດປ່ອຍຊາດ, ປົກປັກຮັກສາປະເທດຊາດແລະນຳພາລິເລີ່ມພາລະກິດປ່ຽນແປງໃໝ່ຢ່າງຮອບດ້ານ ແລະ ມີຫຼັກການຢູ່ປະເທດເຮົາ; ພວກເຮົາຂໍຈົດຈຳຄຸນງາມຄວາມດີ ແລະ ຜົນງານອັນໃຫຍ່ຫຼວງຂອງເພິ່ນ ແລະຂອງບັນດາທ່ານຜູ້ນຳພັກ-ລັດ ຕະຫຼອດເຖິງບັນດາສະຫາຍພະນັກງານ, ສະມາຊິກພັກ, ນັກຮົບ ແລະ ປະຊາຊົນລາວ ຜູ້ທີ່ເສຍສະຫຼະຊີວິດເພື່ອພາລະກິດປະຕິວັດເມື່ອກ່ອນ ກໍຄືເພື່ອພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດຂອງພວກເຮົາ.

ກອງປະຊຸມໃຫຍ່ຜູ້ແທນຂອງພວກເຮົາທຸກສະໄໝລ້ວນແຕ່ມີຄວາມໝາຍສຳຄັນ, ເປັນເຫດການການເມືອງຂອງປະເທດເຮົາ; ສຳລັບກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີXIIຂອງພັກຄັ້ງນີ້ກໍແມ່ນເຫດການການເມືອງໜຶ່ງທີ່ສຳຄັນ ໃນຂະບວນວິວັດແຫ່ງການກຳເນີດ, ເຕີບໃຫຍ່ ແລະ ຂະຫຍາຍຕົວຂອງພັກເຮົາ ຕະຫຼອດໄລຍະ 70 ປີຜ່ານມາ, ທັງຍັງເປັນບາດລ້ຽວສຳຄັນແຫ່ງການກ້າວເດີນຂອງປະເທດຊາດ ແລະ ປະຊາຊົນລາວເຮົາໃນໄລຍະໃໝ່.

ໃນພິທີ, ຍັງໄດ້ຮັບຊົມການສະແດງສິລະປະ-ວັນນະຄະດີ ທີ່ມີຄວາມສວຍສົດງົດງາມ ເຊິ່ງສະແດງຜ່ານບົດເພງ, ບົດຟ້ອນ ເພື່ອຊົມເຊີຍຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ.



## ສູນທອນພົດ...

(ຕໍ່ຈາກໜ້າ 1)

ການເມືອງອັນສູງສົ່ງຂອງສະຫາຍຜູ້ແທນ, ມາຮອດເວລານີ້ ກອງປະຊຸມໃຫຍ່ໃກ້ຈະສິ້ນສຸດລົງດ້ວຍຜົນສຳເລັດຢ່າງສະຫງ່າງາມ.

ກອງປະຊຸມໃຫຍ່ ໄດ້ຄົ້ນຄວ້າພິຈາລະນາຢ່າງເລິກເຊິ່ງ ແລະ ມີຄວາມເປັນເອກະພາບຢ່າງສົມບູນ ແລະ ເປັນເອກະສັນຕົກລົງ ແລະ ຮັບຮອງເອົາທຸກໆບັນຫາທີ່ຍົກຂຶ້ນໃນລະບຽບວາລະຂອງກອງປະຊຸມໃຫຍ່ທຸກປະການ; ພິເສດແມ່ນການຮັບຮອງເອົາໂຄງການການເມືອງຂອງພັກ ສະບັບທີ III ເຊິ່ງຈະເປັນໂຄງການການເມືອງທີ່ຊີ້ທາງເດີນໃຫ້ພັກເຮົາ, ປວງຊົນລາວບັນດາເຜົ່າສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ, ເປັນລະບອບການເມືອງທີ່ໄດ້ມາຈາກປະຊາຊົນ ໂດຍປະຊາຊົນ ເພື່ອປະຊາຊົນ ນັ້ນ ໃຫ້ໜັກແໜ້ນກ້າວຂຶ້ນສູ່ສັງຄົມນິຍົມ. ນັ້ນເປັນການຢືນຢັນຕື່ມອີກກ່ຽວກັບຄວາມເດັດດ່ຽວໜຽວແໜ້ນຕໍ່ອຸດົມການອັນສູງສຸດຂອງພັກ ກໍຄືຄວາມຕັດສິນໃຈຍຶດໝັ້ນຢ່າງສະເໝີຕົ້ນສະເໝີປາຍ ຕໍ່ທາດແທ້ປະຕິວັດ ແລະ ມູນເຊື້ອອັນສະຫງ່າງາມຂອງພັກເຮົາ ໃນການນຳພາປະເທດຊາດສູ່ຄວາມວັດທະນະຖາວອນ.

ເພື່ອເຮັດໃຫ້ໂຄງການການເມືອງຂອງພັກ ໄດ້ຮັບການຈັດຕັ້ງຜັນຂະຫຍາຍສູ່ລວງເລິກນັ້ນ ກອງປະຊຸມໃຫຍ່ຄັ້ງນີ້ ໄດ້ຮັບຮອງເອົາທັດສະນະ, ເນື້ອໃນການຕີລາຄາໝາກຜົນຂອງການປະຕິບັດແນວທາງປ່ຽນແປງໃໝ່ຮອບດ້ານມີຫຼັກການຂອງພັກເຮົາ ໃນເກືອບ 40 ປີຜ່ານມາ ແລະ ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີXIຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ IX(2021-2025)ເພື່ອສະຫຼຸບຖອດຖອນບົດຮຽນ ແລະ ສືບຕໍ່ວາງຈຸດໝາຍເພື່ອນຳພາພາລະກິດປະຕິວັດ ຮອດປີ 2055, ຍຸດທະສາດພັດທະນາ ໄລຍະ 10 ປີ (2026-2035) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ໃຫ້ມີພື້ນຖານອັນໜັກແໜ້ນສຳລັບບາດກ້າວເດີນຕໍ່ໄປຂອງປະເທດຊາດ; ນັ້ນຖືເປັນຂີດໝາຍສຳຄັນປະຫວັດສາດທີ່ພັກເຮົາ ກໍຄືການນຳພັກເຮົາຮຸ່ນນີ້ ໄດ້ມີຄວາມມຸ່ງໝັ້ນ ແລະສ້າງພື້ນຖານປະໄວ້ໃຫ້ຮຸ່ນສືບທອດຂອງພັກເຮົາ ສືບຕໍ່ດຳເນີນພາລະກິດປະຕິວັດສູ່ຈຸດໝາຍທີ່ວາງໄວ້ຢ່າງໜັກແໜ້ນ.

ບັນດາສະຫາຍທີ່ຮັກແພງ,

ກອງປະຊຸມໃຫຍ່ຂອງພັກເຮົາ ໄດ້ເປັນເອກະພາບໃນລະດັບສູງ ຮັບຮອງເອົາກົດລະບຽບຂອງພັກສະບັບປັບປຸງ ເຊິ່ງເປັນທຳມະນູນ, ແມ່ນແນວທາງການຈັດຕັ້ງແລະການເຄື່ອນໄຫວຂອງພັກເຮົາ ທີ່ໄດ້ຮັບການບູລະນະໃຫ້ສອດຄ່ອງກັບໂຄງການການເມືອງ ກໍຄືແນວທາງການເມືອງໃນເງື່ອນໄຂໃໝ່ ທີ່ກອງປະຊຸມໃຫຍ່ຄັ້ງນີ້ວາງອອກ.

ອັນສຳຄັນໜຶ່ງ, ກອງປະຊຸມໃຫຍ່ ໄດ້ເລືອກຕັ້ງເອົາຄະນະບໍລິຫານງານສູນກາງພັກຊຸດໃໝ່ ທີ່ມີການສົມທົບຢ່າງກົມກຽວຂອງໂຄງປະກອບບຸກຄະລາກອນທີ່ເໝາະສົມ ລະຫວ່າງຮຸ່ນຄົນ, ອາຍຸກະສຽນ, ເພດ, ເຜົ່າ, ບັນລຸໄດ້ຕາມມາດຕະຖານ ແລະ ເງື່ອນໄຂທີ່ວາງອອກ, ເປັນຜູ້ມີມານະຈິດປະຕິວັດບຸກ; ກອງປະຊຸມໃຫຍ່ຂອງພວກເຮົາ ເຊື່ອໝັ້ນວ່າບັນດາສະຫາຍກຳມະການສູນກາງພັກຊຸດນີ້ ຈະສືບຕໍ່ເປັນຄະນະນຳຍຸດທະສາດທີ່ເຂັ້ມແຂງຂອງພັກ, ສາມາດປະຕິບັດໜ້າທີ່ການເມືອງຂອງຕົນໄດ້ເປັນຢ່າງດີ.

ຄະນະບໍລິຫານງານສູນກາງພັກ ສະໄໝທີ XII ເຂົ້າໃຈດີວ່າ ນີ້ແມ່ນການມອບໝາຍພາລະອັນໜັກໜ່ວງ, ຮອບດ້ານຈາກທົ່ວພັກ ໃຫ້ສືບຕໍ່ແບກຫາບພາລະກິດປະຕິວັດຂອງພັກເຮົາໃນອີກ 5 ປີຕໍ່ໜ້າ, ທັງເປັນຫຼັກແຫຼ່ງແກ່ນສານ ແຫ່ງຄວາມສາມັກຄີເປັນເອກະພາບພາຍໃນພັກ ແລະ ໃນສັງຄົມ, ນຳພາ-ຊີ້ນຳການຈັດຕັ້ງປະຕິບັດມະຕິ XII ຂອງພັກ ໃຫ້ບັນລຸຄາດໝາຍທີ່ວາງໄວ້.

- ຄະນະປະທານທີ່ນັບຖື,
- ບັນດາສະຫາຍທີ່ຮັກແພງທັງຫຼາຍ,

ກອງປະຊຸມໃຫຍ່ຂອງພັກເຮົາ ໄດ້ຮັບຜົນສຳເລັດຢ່າງຈົບງາມ, ອັນໄດ້ຢັ້ງຢືນຢ່າງຈະແຈ້ງເຖິງຄວາມສາມັກຄີເປັນເອກະພາບສູງ ແລະ ຄວາມຮັບຜິດຊອບຢ່າງເຕັມປ່ຽມຂອງພັກເຮົາໃນການຕົກລົງບັນຫາທີ່ສຳຄັນ ແລະ ເປັນພື້ນຖານຂອງພັກ, ຂອງການປະຕິວັດ ແລະ ຊາຕາກຳຂອງປະເທດຊາດ.

ຜົນສຳເລັດຂອງກອງປະຊຸມໃຫຍ່ ໄດ້ຢືນຢັນເຖິງມານະຈິດປະຕິວັດອັນໜຽວແໜ້ນ ແລະ ທັດສະນະຫຼັກໝັ້ນຊຶນຊັ້ນກຳມະກອນຂອງພັກເຮົາ ທີ່ຍາມໃດກໍຈົງຮັກພັກດີຕໍ່ຜົນປະໂຫຍດຂອງຊາດ ແລະ ຄວາມມຸ່ງມາດປາຖະໜາຂອງປະຊາຊົນບັນດາເຜົ່າ; ພ້ອມກັນນັ້ນ, ກໍສ່ອງແສງໃຫ້ເຫັນເຖິງຄວາມບຸກບືນສູ້ຊົນ ແລະ ຄວາມຮັບຜິດຊອບສູງຂອງຜູ້ແທນກອງປະຊຸມໃຫຍ່ທຸກສະຫາຍ ກໍຄືທຸກພາກສ່ວນທີ່ໄດ້ຕັ້ງໜ້າກະກຽມ ເຮັດໃຫ້ກອງປະຊຸມໃຫຍ່ຄັ້ງນີ້ ສາມາດດຳເນີນໄປດ້ວຍດີ.

ກອງປະຊຸມໃຫຍ່ຂໍສະແດງຄວາມຂອບອົກຂອບໃຈຕໍ່ທຸກພາກສ່ວນ, ພະນັກງານ, ສະມາຊິກພັກ, ນັກປະຕິວັດອາວຸໂສ, ຕົວແທນຂອງປະຊາຊົນບັນດາເຜົ່າແລະບັນດາຊັ້ນຄົນ, ພາກທຸລະກິດ ທັງພາກລັດ, ເອກະຊົນພາຍໃນ ລວມໄປເຖິງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສື່ມວນຊົນ ທີ່ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການກະກຽມວຽກຮອບດ້ານໃຫ້ແກ່ກອງປະຊຸມໃຫຍ່ຄັ້ງນີ້ ແລະ ໄດ້ນຳເອົາການສະໜັບສະໜູນອູ້ມຊູທາງດ້ານວັດຖຸ ແລະ ຈິດໃຈ ມາສູ່ກອງປະຊຸມໃຫຍ່ຂອງພວກເຮົາ.

ຂໍສະແດງຄວາມຂອບໃຈຢ່າງຈິງໃຈ ໄປຍັງບັນດາພັກອ້າຍນ້ອງ ແລະ ພັກການເມືອງຕ່າງໆໃນທົ່ວໂລກ ທີ່ໄດ້ສົ່ງສານອວຍພອນສະແດງຄວາມຂໍ່ານັບຊົມເຊີຍ ແລະ ໃຫ້ການສະໜັບສະໜູນຕໍ່ກອງປະຊຸມໃຫຍ່ຂອງພັກພວກເຮົາໃນຄັ້ງນີ້ ທີ່ສະແດງອອກເຖິງນ້ຳໃຈສາກົນອັນຜ່ອງໃສ ແລະ ເປັນການປຸກລະດົມໃຫ້ກຳລັງໃຈອັນໃຫຍ່ຫຼວງຕໍ່ກອງປະຊຸມໃຫຍ່ ແລະ ຕໍ່ພັກປະຊາຊົນປະຕິວັດລາວ ຂອງພວກເຮົາ.

ບັນດາສະຫາຍທີ່ຮັກແພງທັງຫຼາຍ,

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກເຮົາ ໄດ້ສຳເລັດລົງຢ່າງຈົບງາມແລ້ວ, ແຕ່ພວກເຮົາຍັງຕ້ອງມີຄວາມຮັບຜິດຊອບສູງແລະເອົາຈິງເອົາຈັງຕໍ່ການຈັດຕັ້ງຜັນຂະຫຍາຍແນວທາງ, ແຜນນະໂຍບາຍ ທີ່ກອງປະຊຸມໃຫຍ່ຄັ້ງນີ້ວາງອອກ ໃຫ້ປາກົດຜົນເປັນຈິງ.

ພັກເຮົາຍັງມີເສັ້ນທາງກ້າວເດີນທີ່ຍາວໄກ, ອຸດົມການ ແລະ ຈຸດໝາຍສັງຄົມນິຍົມ ບໍ່ອາດເກີດເປັນຈິງໄດ້ດ້ວຍຕົວມັນເອງ ຖ້າບໍ່ມີສະມາຊິກພັກທີ່ປອດໃສ, ເຂັ້ມແຂງ, ໜັກແໜ້ນເປັນຫຼັກແຫຼ່ງ, ເປັນຜູ້ນຳພາ. ສະນັ້ນ, ຈຶ່ງຂໍຮຽກຮ້ອງມາຍັງທົ່ວພັກ ໂດຍສະເພາະບັນດາສະຫາຍກຳມະການສູນກາງພັກ ສະໄໝທີ XII ທີ່ໄດ້ຮັບຄວາມໄວ້ວາງໃຈຈາກກອງປະຊຸມໃຫຍ່ຄັ້ງນີ້ ຈຶ່ງເຊີດຊູມານະຈິດປະຕິວັດ, ຄວາມຮັບຜິດຊອບການເມືອງ, ຍົກສູງຄວາມເປັນແບບຢ່າງນຳໜ້າ; ຝຶກຝົນຫຼໍ່ຫຼອມຕົນເອງຮອບດ້ານ; ປັບປຸງແບບແຜນການນຳພາ-ແບບແຜນວິທີເຮັດວຽກ ທີ່ຖືກຕ້ອງ, ສອດຄ່ອງ ແລະ ແທດກັບຕົວຈິງ ເພື່ອນຳພາການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍ ທີ່ກອງປະຊຸມໃຫຍ່ຄັ້ງນີ້ວາງອອກ ໃຫ້ມີຜົນສຳເລັດ.

ຄະນະພັກແຕ່ລະຂັ້ນ ຈົ່ງພ້ອມກັນເສີມຂະຫຍາຍຄວາມເປັນເຈົ້າການໃນການຜັນຂະຫຍາຍແນວທາງ, ແຜນນະໂຍບາຍ ທີ່ກອງປະຊຸມໃຫຍ່ຄັ້ງນີ້ວາງອອກ ຢ່າງປະດິດສ້າງ ແລະ ປຸກລະດົມມະຫາຊົນ ຍູ້ແຮງຂະບວນການແຂ່ງຂັນຮັກຊາດແລະພັດທະນາ ໃຫ້ກວ້າງຂວາງ, ເລິກເຊິ່ງ ແລະ ຕໍ່ເນື່ອງ ເພື່ອເລັ່ງໃສ່ສ້າງການແຂ່ງຂັນ ແລະ ການສ້າງກຳລັງແຮງ ໃຫ້ແກ່ການພັດທະນາປະເທດຊາດໃນຊຸມປີຕໍ່ໜ້າ.

ຂ້າພະເຈົ້າ ເຊື່ອໝັ້ນຢ່າງໜັກແໜ້ນວ່າ ດ້ວຍແນວທາງປ່ຽນແປງໃໝ່ອັນຖືກຕ້ອງ ກໍຄືບົດຮຽນພຶດຕິກຳຕົວຈິງ ທີ່ໄດ້ຜ່ານການທົດສອບ ແລະ ໄດ້ຮັບຜົນຢ່າງດີມາແລ້ວ, ບວກກັບແນວທາງທີ່ກອງປະຊຸມໃຫຍ່ຄັ້ງນີ້ຂອງພັກວາງອອກ, ດ້ວຍການເສີມຂະຫຍາຍມູນເຊື້ອອັນດີງາມຂອງພັກແລະຂອງຊາດຕິດພັນກັບການຍົກສູງນ້ຳໃຈຮັກຊາດ, ຈິດໃຈເອກະລາດ, ເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ຂອງປວງຊົນລາວທັງຊາດ; ດ້ວຍການສະໜັບສະໜູນຮ່ວມມືຂອງປະເທດອ້າຍນ້ອງເພື່ອນມິດຜູ້ຢູ່ໃກ້ ແລະ ຢູ່ໄກໃນໂລກ, ອົງການຈັດຕັ້ງສາກົນຕ່າງໆ ພາລະກຳປະຫວັດສາດຂອງພັກເຮົາ ທີ່ຕອບສະໜອງຄວາມມຸ່ງຫວັງຂອງປະຊາຊົນລາວບັນດາເຜົ່າ ທີ່ຈະນຳເອົາປະເທດຊາດກ້າວຂຶ້ນສູ່ຈຸດໝາຍປາຍທາງນັ້ນ ຈະໄດ້ຮັບການປະຕິບັດທີ່ມີຜົນສຳເລັດຢ່າງແນ່ນອນ.

ໃນທ່າມກາງບັນຍາກາດມີຄວາມໝາຍສຳຄັນປະຫວັດສາດ ແລະ ປ່ຽມລົ້ນໄປດ້ວຍນ້ຳໃຈຟົດຟື້ນປະຕິວັດບຸກ, ໃນນາມຄະນະປະທານ, ຂ້າພະເຈົ້າ ຂໍປະກາດປິດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ທີ່ມີກຽດສະຫງ່າ ຢ່າງເປັນທາງການ ນັບແຕ່ເວລານີ້ເປັນຕົ້ນໄປ.

## ຜົນສໍາເລັດ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 8 ມັງກອນນີ້ ທີ່ຫໍປະຊຸມແຫ່ງຊາດ, ສະຫາຍ ກິແກ້ວ ໄຂຄໍາພິທູນ ກໍາມະການກົມການເມືອງສູນກາງພັກ, ຫົວໜ້າກອງເລຂາກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນວ່າ: ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ໄດ້ດໍາເນີນມາແຕ່ວັນທີ 6 ຮອດວັນທີ 8 ມັງກອນ 2026 ທີ່ນະຄອນຫຼວງວຽງຈັນ ເປັນເວລາ 3 ວັນເຕັມ ໂດຍມີຜູ້ແທນທັງໝົດ 835 ສະຫາຍ ຍິງ 123 ສະຫາຍ ເຊິ່ງເປັນຕົວແທນໃຫ້ສະມາຊິກພັກທັງໝົດ 421,865 ສະຫາຍ ຈາກທົ່ວປະເທດ ເຂົ້າຮ່ວມ; ພ້ອມນັ້ນ, ຍັງມີແຂກຖືກເຊີນຈໍານວນ 391 ສະຫາຍ ລວມຜູ້ເຂົ້າຮ່ວມກອງປະຊຸມໃຫຍ່ທັງໝົດ 1,226 ສະຫາຍ.

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ແມ່ນເຫດການທາງດ້ານການເມືອງ-ສັງຄົມ ອັນສໍາຄັນຍິ່ງຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ໄດ້ດໍາເນີນຢ່າງຖືກຕ້ອງຕາມກົດລະບຽບຂອງພັກ ພາຍໃຕ້ບັນຍາກາດສ້າງສັນ ເອົາການເອົາງານ ມີຄວາມຮັບຜິດຊອບສູງ ແລະ ໄດ້ສິ້ນສຸດລົງດ້ວຍຜົນສໍາເລັດອັນຈົບງາມ ພາຍໃຕ້ຄໍາຂວັນ: “ຍົກສູງບົດບາດການນໍາພາທີ່ເຂັ້ມແຂງຂອງພັກ, ຕັ້ງໜ້າສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ໜັກແໜ້ນກ້າວຂຶ້ນສູ່ສັງຄົມນິຍົມ”.

ບັນດາຜູ້ເຂົ້າຮ່ວມກອງປະຊຸມໃຫຍ່ທັງໝົດ ລ້ວນແຕ່ເຫັນເປັນເອກະພາບກັນວ່າ, ນີ້ແມ່ນກອງປະຊຸມໃຫຍ່ທີ່ມີຄວາມສາມັກຄີເປັນເອກະພາບສູງ; ແມ່ນກອງປະຊຸມໃຫຍ່ແຫ່ງການຍູ້ແຮງພາລະກິດປ່ຽນແປງໃໝ່ໃຫ້ເຂົ້າສູ່ລວງເລິກ ແລະ ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ, ຮອບດ້ານ; ແມ່ນກອງປະຊຸມໃຫຍ່ແຫ່ງໄຊຊະນະ, ແມ່ນກອງປະຊຸມໃຫຍ່ແຫ່ງການເສີມຂະຫຍາຍມານະຈິດປະຕິວັດ, ແມ່ນກອງປະຊຸມໃຫຍ່ແຫ່ງຄວາມເຊື່ອໝັ້ນຕໍ່ການສືບຕໍ່ກ້າວຂຶ້ນຂອງປະເທດຊາດ, ທົ່ວພັກແລະທົ່ວປວງຊົນລາວ ຕ່າງກໍຊື່ນຊົມຍິນດີ ແລະ ຕອບຮັບດ້ວຍບັນຍາກາດອັນຟົດຟື້ນຕໍ່ຜົນສໍາເລັດຂອງກອງປະຊຸມໃຫຍ່ຄັ້ງນີ້.

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ໄດ້ປະຕິບັດໜ້າທີ່ຢ່າງຖືກຕ້ອງຕາມກົດລະບຽບຂອງພັກ ແລະ ໄດ້ພິຈາລະນາຮັບຮອງເອົາເອກະສານສໍາຄັນຂອງພັກ, ຂອງຊາດ ແລະ ເລືອກຕັ້ງເອົາຄະນະບໍລິຫານງານສູນກາງພັກ ສະໄໝທີ XII ຂອງພັກ ເຊິ່ງມີລາຍລະອຽດດັ່ງນີ້:

ກອງປະຊຸມໃຫຍ່ໄດ້ຮັບຮອງເອົາໂຄງການການເມືອງ ສະບັບທີ 3 ຂອງພັກ ທີ່ສະເໜີໂດຍສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກເຊິ່ງເປັນເອກະສານສໍາຄັນທີ່ກໍານົດທິດພື້ນຖານໃຫ້ການວາງຍຸດທະສາດ ແລະ ວິໄສທັດຂອງພັກ. ໂຄງການການເມືອງສະບັບນີ້ ໄດ້ຕີລາຄາການຈັດຕັ້ງປະຕິບັດໂຄງການການເມືອງ ສະບັບທີ 2 ກໍຄືພັກນໍາພາເຮັດສໍາເລັດພາລະກິດປົດປ່ອຍຊາດ ແລະ ສ້າງພື້ນຖານຂອງລະບອບປະຊາທິປະໄຕປະຊາຊົນກ້າວຂຶ້ນສູ່ສັງຄົມນິຍົມ ເຊິ່ງໄດ້ແບ່ງເປັນ 3 ໄລຍະ (ພັກນໍາພາພາລະກິດປົດປ່ອຍຊາດ, ພັກນໍາພາພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ແລະ ພັກນໍາພາພາລະກິດປ່ຽນແປງໃໝ່); ພ້ອມທັງຍົກໃຫ້ເຫັນບັນດາບົດຮຽນ ແລະ ບັນຫາທີ່ເປັນລັກສະນະກົດເກນຂອງການປະຕິວັດລາວ 6 ປະການ. ພ້ອມນັ້ນ, ຍັງໄດ້ວາງຈຸດໝາຍຮອດປີ 2055 ກໍຄືວັນສ້າງຕັ້ງພັກຄົບຮອບ 100 ປີ ສູ້ຊົນສ້າງປະເທດເຮົາໃຫ້ເປັນປະເທດກໍາລັງພັດທະນາ, ມີລາຍຮັບປານກາງສູງ ຫຍັບເຂົ້າໃກ້ປະເທດທີ່ມີລາຍຮັບສູງ, ມີລະບົບການເມືອງທີ່ເຂັ້ມແຂງ, ມີພື້ນຖານເສດຖະກິດທີ່ທັນສະໄໝ, ກໍາລັງການຜະລິດໄດ້ຮັບການພັດທະນາຮອບດ້ານ ໂດຍມີການພົວພັນການຜະລິດທີ່ສອດຄ່ອງ ແລະ ກ້າວໜ້າ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໄດ້ມີພື້ນຖານອັນໜັກແໜ້ນ ກ້າວສູ່ຄວາມອຶ່ມໜໍາສໍາລານ; ພ້ອມທັງໄດ້ກໍານົດ 11 ເນື້ອໃນພື້ນຖານຂອງການບູລະນະລະບອບປະຊາທິປະໄຕປະຊາຊົນກ້າວຂຶ້ນສູ່ສັງຄົມນິຍົມ.

ກອງປະຊຸມໃຫຍ່ໄດ້ພິຈາລະນາ ແລະ ເປັນເອກະສັນຮັບຮອງເອົາລາຍງານການເມືອງຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ເຊິ່ງໄດ້ຕີລາຄາຢ່າງກວມລວມ ແລະ ເລິກເຊິ່ງກັບໝາກຜົນແຫ່ງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ໃນ 5 ປີຜ່ານມາ ທີ່ສາມາດຜ່ານຜ່າຄວາມຫຍຸ້ງຍາກ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນໄດ້ໂດຍພື້ນຖານ, ເສດຖະກິດ-ສັງຄົມຍັງຮັກສາທ່ວງທ່າເຕີບໂຕຕໍ່ເນື່ອງ, ບັນຫາເຄັ່ງຮ້ອນເສດຖະກິດ-ການເງິນ ໄດ້ຮັບການແກ້ໄຂ ແລະ ຜ່ອນຄາຍລົງເທື່ອລະກ້າວ.

ກອງປະຊຸມໃຫຍ່ໄດ້ເປັນເອກະພາບພາວະວິໄສຕໍ່ຂໍ້ຄົງຄ້າງ, ຂໍ້ຂາດຕົກບົກຜ່ອງໃນການນໍາພາ-ຊີ້ນໍາຂອງພັກ ກໍຄືການຈັດຕັ້ງປະຕິບັດໜ້າທີ່, ວຽກງານຈຸດສຸມໃນບາງດ້ານທີ່ບໍ່ສາມາດບັນລຸຜົນຕາມຄາດໝາຍທີ່ວາງອອກ, ພ້ອມທັງຊີ້ໃຫ້ເຫັນສາເຫດຕົ້ນຕໍ ເພື່ອກໍານົດທິດທາງມາດຕະການແກ້ໄຂທີ່ສອດຄ່ອງ ແລະ ແທດເໝາະ, ພ້ອມທັງເລັ່ງທວງໃຫ້ດໍາເນີນການແກ້ໄຂຂໍ້ຄົງຄ້າງທີ່ຜ່ານມາຢ່າງຈິງຈັງ ເພື່ອຮັບປະກັນໃຫ້ການຫັນປ່ຽນໃໝ່ຢ່າງຕັ້ງໜ້າຫຼາຍຂຶ້ນ; ກອງປະຊຸມໃຫຍ່ໄດ້ຮັບຮອງເອົາ 6 ບົດຮຽນທີ່ຖອດຖອນໄດ້ຈາກພຶດຕິກໍາແຫ່ງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ກໍຄືພຶດຕິກໍາຕົວຈິງໃນການນໍາພາຂອງພັກເຮົາໃນ 5 ປີຜ່ານມາ ເພື່ອເປັນບ່ອນອີງສໍາຄັນໃນການປັບປຸງການນໍາພາ-ຊີ້ນໍາ ແລະ ການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກໃນຕໍ່ໜ້າ.

ເພື່ອສືບຕໍ່ພາລະກິດອັນສໍາຄັນໃຫ້ບັນລຸຕາມຄາດໝາຍທີ່ວາງອອກ, ກອງປະຊຸມໃຫຍ່ໄດ້ຢືນຢັນຄວາມຕັດສິນໃຈທີ່ຈະສືບຕໍ່ນໍາພາປະເທດຊາດ ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ໜັກແໜ້ນກ້າວຂຶ້ນສູ່ສັງຄົມນິຍົມ ບົນພື້ນຖານຍົກສູງບົດບາດການນໍາພາທີ່ເຂັ້ມແຂງຂອງພັກ, ເສີມຂະຫຍາຍກໍາລັງແຮງຂອງຊາດ, ສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ຮອດປີ 2030 ໃຫ້ມີພື້ນຖານແລະທ່ວງທ່າທີ່ໜັກແໜ້ນໃຫ້ການພັດທະນາ ພາຍຫຼັງປະເທດຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ, ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ, ຍົກລະດັບການສ້າງປະຖົມປັດໄຈໃຫ້ການກ້າວຂຶ້ນສູ່ສັງຄົມນິຍົມຢ່າງໜັກແໜ້ນໃນຊຸມປີຕໍ່ໜ້າ; ໂດຍສະເພາະໃນ 5 ປີຕໍ່ໜ້ານີ້, ກອງປະຊຸມໃຫຍ່ໄດ້ເອກະພາບຮັບຮອງເອົາ 11 ທິດທາງໃຫຍ່ເພື່ອສູ້ຊົນຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເນື້ອໃນຂອງລາຍງານການເມືອງໃຫ້ມີຜົນສໍາເລັດຕົວຈິງ.

ກອງປະຊຸມໃຫຍ່ໄດ້ພິຈາລະນາແລະຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ X (2026-2030) ເຊິ່ງແມ່ນແຜນຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ເປັນແຜນງານ, ໂຄງການລະດັບຊາດ, ລວມທັງຂອບການລົງທຶນສໍາລັບໂຄງການເຫຼົ່ານັ້ນ. ໃນນັ້ນ, ໄດ້ກໍານົດອອກເປັນ 6 ເປົ້າໝາຍໃຫຍ່ ເພື່ອສືບຕໍ່ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງຄື: 1) ສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງດ້ວຍການນໍາໃຊ້ທ່າແຮງເພື່ອເຮັດໃຫ້ເສດຖະກິດມີສະຖຽນລະພາບ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ ໂດຍຍູ້ການເຕີບໂຕເສດຖະກິດແຫ່ງຊາດໃຫ້ບັນລຸ 6% ຕໍ່ປີຂຶ້ນໄປ; 2) ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນ ແລະ ສາມາດຮູ້ນໍາໃຊ້ເຕັກໂນໂລຊີທີ່ທັນສະໄໝ; 3) ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ຕົວເມືອງແລະເຂດຊົນນະບົດ ໄດ້ຮັບການພັດທະນາຢ່າງສົມດູ່ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ຫຼຸດລົງເທື່ອລະກ້າວ; 4) ປົກປັກຮັກສາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໃຫ້ມີຄວາມຍືນຍົງແລະສາມາດກຽມພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດຕ່າງໆ; 5) ການເຊື່ອມໂຍງ-ເຊື່ອມຈອດພາກພື້ນ ແລະ ສາກົນຢ່າງກວ້າງຂວາງ ແລະ ມີປະສິດທິຜົນ; 6) ການຄຸ້ມຄອງ-ບໍລິຫານລັດ ໃຫ້ມີປະສິດທິພາບ, ການເມືອງມີສະຖຽນລະພາບ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ຍຸຕິທໍາແລະສີວິໄລ.

ກອງປະຊຸມໃຫຍ່ໄດ້ພິຈາລະນາ ແລະ ຮັບຮອງກົດລະບຽບພັກ ສະໄໝທີ XII ເພື່ອໃຫ້ສອດຄ່ອງ, ຮອງຮັບການຈັດຕັ້ງປະຕິບັດແນວທາງການເມືອງຂອງພັກ, ຊຸກຍູ້ວຽກງານກໍ່ສ້າງພັກ ເຮັດໃຫ້ພັກເຮົາມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ, ມີຄວາມສາມາດພຽງພໍໃນການນໍາພາພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດໃນໄລຍະໃໝ່ກ້າວຂຶ້ນສູ່ສັງຄົມນິຍົມຢ່າງໜັກແໜ້ນ.

ກອງປະຊຸມໃຫຍ່ໄດ້ພິຈາລະນາ ແລະ ຮັບຮອງເອົາບົດສໍາຫຼວດການນໍາພາລວມຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ເຊິ່ງໄດ້ຕີລາຄາສູງຕໍ່ຄວາມບາກບັ່ນພະຍາຍາມອັນຕັ້ງໜ້າ ແລະ ຄວາມເປັນເຈົ້າການປະດິດສ້າງໃນການເສີມຂະຫຍາຍມູນເຊື້ອ ແລະ ບົດຮຽນອັນປະເສີດຂອງພັກ ໃນການເພີ່ມທະວີຄວາມສາມັກຄີເປັນເອກະພາບຢູ່ພາຍໃນພັກ, ຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ, ດໍາເນີນການປັບປຸງ-ດັດແປງກົນໄກນໍາພາ-ຊີ້ນໍາຂອງສູນກາງພັກ ແລະ ຄະນະພັກແຕ່ລະຂັ້ນ, ປຸກລະດົມທົ່ວພັກແລະທົ່ວປວງຊົນ ເຂົ້າຮ່ວມຈັດຕັ້ງປະຕິບັດແນວທາງການເມືອງຂອງພັກໃຫ້ມີຜົນສໍາເລັດ.

ກອງປະຊຸມໃຫຍ່ໃນຄັ້ງນີ້, ຍັງໄດ້ເປັນເອກະສັນເລືອກຕັ້ງເອົາຄະນະບໍລິຫານງານສູນກາງພັກ ສະໄໝທີ XII ເຊິ່ງປະກອບດ້ວຍກໍາມະການສົມບູນ 73 ສະຫາຍ ແລະ ກໍາມະການສໍາຮອງ 15 ສະຫາຍ ເພື່ອເປັນແກ່ນສານນໍາພາທົ່ວພັກ, ທົ່ວລັດ, ທົ່ວກໍາລັງປະກອບອາວຸດ ແລະ ທົ່ວປວງຊົນ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກໃຫ້ມີຜົນສໍາເລັດ, ສ້າງບາດກ້າວບຸກທະລຸໃນການສ້າງການຫັນປ່ຽນທີ່ແຂງແຮງໃນການພັດທະນາ ແລະ ນໍາພາປະເທດຊາດກ້າວຂຶ້ນຢ່າງໜັກແໜ້ນຕໍ່ໄປ.

ໃນກອງປະຊຸມຄົບຄະນະຄັ້ງປະຖົມມະລຶກຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XII ຍັງໄດ້ເປັນເອກະພາບເລືອກຕັ້ງກໍາມະການກົມການເມືອງສູນກາງພັກ ຈໍານວນ 13 ສະຫາຍ, ເລືອກເອົາກໍາມະການຄະນະເລຂາທິການສູນກາງພັກ ຈໍານວນ 11 ສະຫາຍ; ກອງປະຊຸມໄດ້ເປັນເອກະພາບຢ່າງສູງເລືອກເອົາສະຫາຍ ທອງລຸນ ສີສຸລິດ ເປັນເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ພ້ອມກັນນັ້ນ, ກໍໄດ້ເລືອກເອົາສະຫາຍພົນເອກ ວິໄລ ຫຼ້າຄໍາຟອງ ເປັນຜູ້ປະຈໍາການຄະນະເລຂາທິການສູນກາງພັກ; ກອງປະຊຸມຍັງໄດ້ເລືອກປະທານ, ບັນດາຮອງປະທານຄະນະກວດກາສູນກາງພັກປະກອບດ້ວຍ 6 ສະຫາຍ ໂດຍແມ່ນສະຫາຍ ວັນໄຊ ພອງສະຫວັນ ເປັນປະທານກວດກາສູນກາງພັກ.

ກອງປະຊຸມໃຫຍ່ໄດ້ສະແດງຄວາມຍ້ອງຍໍຊົມເຊີຍສະມາຊິກພັກ, ພະນັກງານ, ທະຫານ, ຕໍາຫຼວດ, ຜູ້ປະກອບການຜະລິດ-ບໍລິການ ແລະ ປະຊາຊົນລາວບັນດາເຜົ່າ, ບັນດາຊັ້ນຄົນໃນຂອບເຂດທົ່ວປະເທດ ແລະ ພີ່ນ້ອງເຊື້ອຊາດລາວຜູ້ຮັກຊາດທີ່ດໍາລົງຊີວິດ ແລະ ທໍາມາຫາກິນຢູ່ຕ່າງປະເທດ ກໍຄືຊາວຕ່າງປະເທດທີ່ອາໄສຢູ່ ສປປລາວ ທີ່ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ເພື່ອສ້າງພື້ນຖານອັນໜັກແໜ້ນ ແລະ ທ່ວງທ່າໃໝ່ໃຫ້ການນໍາເອົາປະເທດເຮົາສືບຕໍ່ກ້າວຂຶ້ນສູ່ຈຸດໝາຍທີ່ວາງໄວ້.

ກອງປະຊຸມຍັງໄດ້ສະແດງຄວາມຂອບອົກຂອບໃຈຢ່າງຈິງໃຈແລະຄວາມຮູ້ບຸນຄຸນຢ່າງເລິກເຊິ່ງ ມາຍັງບັນດາພັກອ້າຍນ້ອງ, ບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນທີ່ໄດ້ໃຫ້ການສະໜັບສະໜູນຊ່ວຍເຫຼືອອັນລໍ້າຄ່າໃນພາລະກິດພັດທະນາ ແລະ ສ້າງສາປະເທດຊາດຂອງປະຊາຊົນເຮົາຕະຫຼອດໄລຍະເວລາທີ່ຜ່ານມາ.

ກອງປະຊຸມໄດ້ຮຽກຮ້ອງມາຍັງຄະນະພັກທຸກຂັ້ນ, ສະມາຊິກພັກທຸກສະຫາຍ ຈົ່ງເຊີດຊູຄວາມເປັນແບບຢ່າງນໍາໜ້າໃນທຸກດ້ານ, ນໍາພາມະຫາຊົນ ປະຕິບັດມະຕິຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ໃຫ້ປາກົດຜົນເປັນຈິງ; ພ້ອມກັນນີ້, ກໍຮຽກຮ້ອງມາຍັງພະນັກງານ, ນັກຮົບ, ປະຊາຊົນລາວບັນດາເຜົ່າ, ບັນດາຊັ້ນຄົນ ແລະ ພີ່ນ້ອງເຊື້ອຊາດລາວຜູ້ຮັກຊາດ ທີ່ດໍາລົງຊີວິດ ແລະ ທໍາມາຫາກິນຢູ່ຕ່າງປະເທດ ຈົ່ງເຊີດຊູນໍ້າໃຈຮັກຊາດ, ເສີມຂະຫຍາຍມານະຈິດບາກບັ່ນບຸກບືນ ເຂົ້າໃສ່ການປະຕິບັດໜ້າທີ່, ທໍາມາຫາກິນແລະສ້າງສາ, ບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວເດີນສູ່ຈຸດໝາຍສັງຄົມນິຍົມຢ່າງໜັກແໜ້ນ.

# ຜົນງານພົ້ນເດັ່ນຂອງສະພາແຫ່ງຊາດ ຊຸດທີ IX (2021-2025)



ການປະຕິບັດພາລະບົດບາດ ດ້ານການຕິດຕາມກວດກາ







**ການປະຕິບັດພາລະບົດບາດດ້ານການຕິດຕາມກວດກາ:** ປີ 2024 ສະພາແຫ່ງຊາດ ໄດ້ເຄື່ອນໄຫວຕິດຕາມກວດກາຕາມພາລະບົດບາດທີ່ກົດໝາຍກຳນົດຢູ່ສູນກາງແລະທ້ອງຖິ່ນ ໄດ້ທັງໝົດ 60 ຄັ້ງ ເຊິ່ງມີບັນດາຫົວຂໍ້ທີ່ພົວພັນກັບບັນຫາເຄັ່ງຮ້ອນ ແລະ ສິ່ງຜົນກະທົບຕໍ່ສັງຄົມ ເປັນຕົ້ນ ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ການຈັດຕັ້ງປະຕິບັດມະຕິກົມການເມືອງສູນກາງພັກ ວ່າດ້ວຍການຍົກສູງຄຸນນະພາບການດຳເນີນຄະດີຕາມຂະບວນຍຸຕິທຳ, ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ດຳລັດວ່າດ້ວຍຊັບສິນທີ່ຖືກຢຶດ, ອາຍັດ ແລະ ຮິບເປັນຂອງລັດ, ການຜັນຂະຫຍາຍເນື້ອໃນກົດໝາຍ ທີ່ເປັນນິຕິກຳໃຕ້ກົດໝາຍ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ຕິດພັນກັບການປະຕິບັດສອງວາລະແຫ່ງຊາດ, ການຈັດຕັ້ງປະຕິບັດໂຄງການຂຸດຄົ້ນແຮ່ທາດ ແລະການຊຸກຍູ້ສົ່ງເສີມການຜະລິດຊົມໃຊ້ພາຍໃນ ເພື່ອຫຼຸດຜ່ອນການນຳເຂົ້າ, ບັນດາໂຄງການຈຸດສຸມຂອງວຽກງານພັດທະນາຊົນນະບົດ,ແກ້ໄຂຄວາມທຸກຍາກ.

ໃນຕະຫຼອດໄລຍະ 1 ປີຜ່ານມາສະພາແຫ່ງຊາດ ໄດ້ຮັບຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ລວມທັງໝົດຈຳນວນ 861 ເລື່ອງ ເຊິ່ງສາມາດພິຈາລະນາແກ້ໄຂ ໄດ້ຈຳນວນ 301 ເລື່ອງ, ດຳເນີນກອງປະຊຸມຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອປຶກສາຫາລືຄຳຮ້ອງຂໍຄວາມເປັນທຳທີ່ມີຄວາມຫຍຸ້ງຍາກໄດ້ຈຳນວນ19ເລື່ອງ, ຕ້ອນຮັບແລະ ໃຫ້ຄຳປຶກສາແກ່ປະຊາຊົນ ຈຳນວນ 350 ເທື່ອຄັ້ງ; ນອກນັ້ນ, ສະພາແຫ່ງຊາດຍັງໄດ້ຮັບຄຳສະເໜີຜ່ານໂທລະສັບສາຍດ່ວນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ທັງໝົດ 1,603 ສາຍ, ສັງລວມເນື້ອໃນໄດ້ຈຳນວນ990ເລື່ອງ ແລະ ໄດ້ສົ່ງໃຫ້ອົງການ ແລະ ພາກສ່ວນກ່ຽວຂ້ອງແລ້ວ ຈຳນວນ30 ພາກສ່ວນ ເຊິ່ງໄດ້ຮັບແຈ້ງຕອບຈາກພາກສ່ວນກ່ຽວຂ້ອງ 7 ພາກສ່ວນ ມີຈຳນວນ 53 ເລື່ອງ. ຮັບຟັງການຊີ້ແຈງຂອງລັດຖະບານ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ພາກສ່ວນກ່ຽວຂ້ອງຢູ່ໃນກອງປະຊຸມສະພາແຫ່ງຊາດ ມີຈຳນວນ30 ພາກສ່ວນ ກວມເອົາ 114 ຄຳຊັກຖາມ.

# ກອງປະຊຸມຄັ້ງປະຖົມມະລຶກຂອງ ຄລຂ ຄໍາມ່ວນ




(ສພຂ) - ວັນທີ 8 ທັນວາຜ່ານມາ ທີ່ສະພາປະຊາຊົນແຂວງຄຳມ່ວນ, ໄດ້ດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ (ຄລຂ) ໂດຍການເປັນປະທານຂອງທ່ານ ບຸນມີ ພົມມະສອນ ປະທານສະພາປະຊາຊົນແຂວງຄຳມ່ວນ ຮອງປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ; ມີບັນດາທ່ານໃນ ຄລຂ ແລະ ຂະແໜງການກ່ຽວຂ້ອງເຂົ້າຮ່ວມ.

ຈຸດປະສົງ ເພື່ອສະຫຼຸບ-ລາຍງານ ການຫັນງຫາກະກຽມ ບັນດາເອກະສານວຽກເລືອກຕັ້ງ ສະມາຊິກສະພາແຫ່ງຊາດ(ສສຊ) ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ(ສພຂ)ຊຸດທີV ເພື່ອຈັດຕັ້ງປະຕິບັດໃນແຕ່ລະບາດກ້າວຂອງແຜນດຳເນີນງານຂອງຄະນະກຳມະການເລືອກຕັ້ງ ໃນການດຳເນີນການເລືອກຕັ້ງສສຊ ຊຸດທີ X ແລະ ສພຂ ຊຸດທີ V ມີຄວາມຖືກຕ້ອງຕາມຂັ້ນຕອນ ແລະ ເວລາທີ່ກຳນົດໄວ້; ເພື່ອເປັນບ່ອນອີງໃນການນຳພາ-ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາວຽກງານການກະກຽມແລະດຳເນີນການເລືອກຕັ້ງ ສສຊ ຊຸດທີ X ແລະ ສພຂ ຊຸດທີ V ໃຫ້ມີຈຸດສຸມ, ຄ່ອງຕົວ ແລະ ມີຜົນສຳເລັດຕາມແຜນການທີ່ວາງໄວ້ ແລະ ເພື່ອປຶກສາຫາລືວຽກງານຕ່າງໆ ແລະ ແບ່ງຄວາມຮັບຜິດຊອບພາຍໃນ ຄລຂ ຕໍ່ວຽກງານເລືອກຕັ້ງ ສສຊ ຊຸດທີ X ແລະ ສພຂ ຊຸດທີ V ໃຫ້ບັນລຸຕາມລະດັບຄາດໝາຍທີ່ກຳນົດໄວ້.

ກອງປະຊຸມໄດ້ຮັບຟັງມະຕິ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການເລືອກຕັ້ງຂັ້ນແຂວງ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີV ສະບັບເລກທີ334/ຄປຈ.ສພຂ, ລົງວັນທີ 4 ທັນວາ 2025; ບົດລາຍງານການຈັດຕັ້ງປະຕິບັດວຽກງານ ການກະກຽມວຽກເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V; ແຜນການ ຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ໃນການກະກຽມ ແລະ ດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີVສະບັບເລກທີ 337/ຄປຈ.ສພຂ, ລົງວັນທີ 5 ທັນວາ 2025; ມະຕິ ກົມການເມືອງສູນກາງພັກ ກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳ ຂອງອົງຄະນະພັກທຸກຂັ້ນຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີV ສະບັບເລກທີ 26/ກມສພ, ລົງວັນທີ 12 ກັນຍາ 2025; ຄຳແນະນຳ ຂອງຄະນະກຳມະການເລືອກຕັ້ງລະດັບຊາດ ກ່ຽວກັບການແຕ່ງຕັ້ງຄະນະກຳມະການເລືອກຕັ້ງ ແລະ ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງຂັ້ນທ້ອງຖິ່ນ, ຢູ່ສະຖານທູດ, ກົງສູນລາວ ແລະ ສຳນັກງານຜູ້ຕາງໜ້າຖາວອນ ຂອງ ສປປລາວ ຢູ່ຕ່າງປະເທດ, ສະບັບເລກທີ 08/ຄລຊ, ລົງວັນທີ 27 ພະຈິກ 2025; ມະຕິ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງຄຳມ່ວນ ເພື່ອດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V, ສະບັບເລກທີ 01/ຄລຂ.ຄມ, ລົງວັນທີ 5 ທັນວາ 2025; ແຜນດຳເນີນງານ ຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ເພື່ອດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີ V,ສະບັບເລກທີ02/ຄລຂ.ຄມ, ລົງວັນທີ 5 ທັນວາ 2025; ຮ່າງມະຕິ ວ່າດ້ວຍການແບ່ງຄວາມຮັບຜິດຊອບ ພາຍໃນຄະນະກຳມະການເລືອກຕັ້ງຂັ້ນແຂວງເພື່ອຮັບໃຊ້ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V; ຮ່າງມະຕິ ວ່າດ້ວຍການແຕ່ງຕັ້ງ ແລະ ການເຄື່ອນໄຫວຂອງບັນດາອະນຸກຳມະການຂອງຄະນະກຳມະການເລືອກຕັ້ງແຂວງຄຳມ່ວນ; ຈາກນັ້ນ, ໄດ້ພ້ອມກັນຄົ້ນຄວ້າປຶກສາຫາລືປະກອບຄຳເຫັນຕໍ່ຮ່າງເອກະສານຂອງກຳມະການເລືອກຕັ້ງຂັ້ນແຂວງ.

# ປາຖະກະຖາ 2 ວັນປະຫວັດສາດຂອງຊາດ



(ສພຂ)-ວັນທີ11 ທັນວາຜ່ານມາ ທີ່ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ໄດ້ພິທີຈັດປາຖະກະຖາວັນສະຖາປະນາ ສປປລາວ ຄົບຮອບ 50 ປີ ແລະ ວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ; ໂດຍການປາຖະກະຖາຂອງທ່ານ ບົວພັນ ແສງຈັນ ຮອງປະທານສະພາປະຊາຊົນແຂວງຄຳມ່ວນ; ເຂົ້າຮ່ວມບັນມີຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານພາຍໃນ ສພຂ. ຄຳມ່ວນເຂົ້າຮ່ວມ.

ທ່ານ ບົວພັນ ແສງຈັນ ໄດ້ຍົກໃຫ້ເຫັນໄຊຊະນະຢ່າງສົມບູນ ຂອງການປະຕິວັດຊາດ ປະຊາທິປະໄຕ ທັງຍົກໃຫ້ເຫັນຜົນງານພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ 50 ປີຜ່ານມາ;ການເສີມຂະຫຍາຍມູນເຊື້ອວັນທີ 2 ທັນວາ ໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ, ເດັດດ່ຽວຍຶດໝັ້ນອຸດົມການສັງຄົມນິຍົມ ທີ່ພັກກຳນົດໄວ້ຢ່າງໜັກແໜ້ນ, ສຸມໃສ່ປະຕິບັດສອງໜ້າທີ່ຍຸດທະສາດປົກປັກຮັກສາແລະສ້າງສາພັດທະນາປະເທດຊາດ; ຈາກນັ້ນ, ທ່ານ ບົວພັນ ແສງຈັນ ຍັງຍົກໃຫ້ເຫັນການເຄື່ອນໄຫວຊີວິດຂອງປະທານ ໄກສອນ ພົມວິຫານ ກັບພາລະກິດປົດປ່ອຍຊາດ, ຜົນງານ, ຄຸນງາມຄວາມດີ ໃນການນຳພາພາລະກິດຕໍ່ສູ້ປົດປ່ອຍຊາດ, ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ພ້ອມນີ້, ທ່ານຍັງເນັ້ນໜັກໃຫ້ຕັ້ງໜ້າຮ່ຳຮຽນແບບຢ່າງຄຸນສົມບັດຂອງປະທານ ໄກສອນ ພົມວິຫານທີ່ມີນ້ຳໃຈເສຍສະລະສູງສົ່ງ, ນັກປະຕິວັດສຸດກົກສຸດປາຍແລະຮັບໃຊ້ປະຊາຊົນໝົດຈິດໝົດໃຈ, ມີຄວາມດຸໝັ່ນພາກພຽນຊອກຮູ້ຮ່ຳຮຽນຢ່າງບໍ່ຢຸດຢັ້ງ, ມີທັດສະນະມະຫາຊົນ, ເປັນຄົນທຸງໃນການເຕົ້າໂຮມຄວາມສາມັກຄີ ແລະ ມີນ້ຳໃຈສາກົນອັນຜ່ອງໃສ.

# ຍົກສູງຄຸນນະພາບດ້ານເນື້ອໃນ ໃຫ້ແກ່ກອງປະຊຸມທ້າຍສະໄໝ



(ສພຂ)-ເພື່ອເປັນການກະກຽມຄວາມພ້ອມທາງດ້ານເນື້ອໃນ ໃຫ້ແກ່ການດຳເນີນກອງປະຊຸມທ້າຍສະໄໝ ຂອງສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ຊຸດທີ IV ວັນທີ 8- 9 ທັນວາຜ່ານມາ ທີ່ສະໂມສອນເມືອງອາດສະພອນ ໄດ້ມີກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມທ້າຍສະໄໝ ຂອງ ສພຂ ຊຸດທີIV ພາຍໃຕ້ການເປັນປະທານຂອງ ທ່ານ ກິ່ງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງ ເຊິ່ງມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ປະທານຄະນະກຳມະການປົກຄອງເມືອງອາດສະພອນ, ບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ-ນະຄອນ, ພະແນການທີ່ກ່ຽວຂ້ອງ, ຄະນະກອງບັນຊາການ ປກສ ແຂວງ ແລະ ແຂກຖືກເຊີນເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານ ແລະ ສົນທະນາແລກປ່ຽນຄຳຄິດເຫັນ ຕໍ່ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ 5 ປີ ຄັ້ງທີ IX (2021-2025), ບົດລາຍງານປີ 2025 ແລະແຜນທິດທາງການປີ2026, ບົດລາຍງານ ການຈັດຕັ້ງປະຕິບັດວຽກງານ 3 ສ້າງ 5 ປີ (2021-2025), ປະຈຳປີ2025 ແລະ ທິດທາງແຜນການ ປະຈຳປີ 2026; ບົດລາຍງານ ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍ ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃນໄລຍະ 5 ປີ (2021-2025) ແລະ ທິດທາງຕໍ່ໜ້າຂອງແຂວງສະຫວັນນະເຂດ ແລະ ບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະ 5 ປີ (2021-2025) ແລະ ທິດທາງຕໍ່ໜ້າ ຂອງແຂວງສະຫວັນນະເຂດ; ຈາກນັ້ນ, ໄດ້ພ້ອມກັນຍົກສູງຄວາມຮັບຜິດຊອບໜ້າທີ່ການເມືອງ ສຸມທຸກສະຕິປັນຍາຄວາມຮູ້ຄວາມສາມາດ ເຂົ້າໃນການຄົ້ນຄວ້າ ແລະ ປະກອບຄຳຄິດເຫັນຢ່າງເລິກເຊິ່ງ, ຖີ່ຖ້ວນ, ສົນທະນາແລກປ່ຽນຄຳຄິດ-ຄຳເຫັນເຊິ່ງກັນແລະກັນ ຍົກໃຫ້ເຫັນດ້ວຍຫຼັກການ, ລັກສະນະສ້າງສັນ, ຈະແຈ້ງ ແລະ ເຂົ້າໃຈງ່າຍ ຮັບປະກັນຄວາມເປັນເອກະພາບ ແລະ ສາມາດຊຸກຍູ້ການປະຕິບັດພາລະບົດບາດຂອງແຕ່ລະພາກສ່ວນ ໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ.

# ຄສຊ ປະຈຳເຂດເລືອກຕັ້ງທີ 13 ສະຫຼຸບວຽກງານປະຈຳປີ 2025




(ສພຂ) - ວັນທີ 15 ທັນວາຜ່ານມາ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ໄດ້ຈັດກອງປະຊຸມສະຫຼຸບວຽກງານປະຈຳປີ2025 ພາຍໃຕ້ການເປັນປະທານຂອງທ່ານ ກິ່ງແກ້ວ ມີວໍລະຈັກ ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13; ມີທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຄະນະເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ; ທ່ານ ບຸນໂຈມ ອຸບົນປະເສີດ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ; ທ່ານ ນາງ ດາວວອນ ໄຊສຸລຽນ ຮອງເລຂາຄະນະບໍລິຫານງານພັກແຂວງ, ປະທານຄະນະກຳມະການປົກຄອງແຂວງ; ມີຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ13, ຄະນະປະຈຳພັກແຂວງ, ຮອງປະທານຄະນະກຳມະການປົກຄອງແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ, ປະທານຄະນະກຳມະການປົກຄອງນະຄອນ, ຄະນະກຳມະການສະພາປະຊາຊົນແຂວງ, ຫ້ອງວ່າການສະພາປະຊາຊົນແຂວງ, ຫົວໜ້າພະແນກການ, ກົມກອງ ແລະ ອົງການທຽບເທົ່າ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການລາຍງານການເຄື່ອນໄຫວວຽກງານ5ປີ(2021-2025), ປະຈຳປີ 2025 ຂອງ ຄສຊ ປະຈຳເຂດເລືອກຕັ້ງທີ 13 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ຮອດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດທີ X; ການລາຍງານຄືນ ຈາກທ່ານຫົວໜ້າພະແນກອຸດສາຫະກຳແລະການຄ້າແຂວງ ກ່ຽວກັບການຂຸດຄົ້ນແຮ່ທາດທົດລອງພາຍໃນແຂວງສະຫວັນນະເຂດ ແລະ ກ່ຽວກັບການຈັດຕັ້ງປະຕິບັດໂຄງການກໍ່ສ້າງໄຟຟ້າຈາກພະລັງງານລົມ ຢູ່ແຂວງສະຫວັນນະເຂດ; ການລາຍງານຄືນ ຈາກທ່ານຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ກ່ຽວກັບການຈັດຕັ້ງປະຕິບັດການຈັດສັນ ແລະ ການຄຸ້ມຄອງ 3 ປະເພດປ່າ ພາຍໃນແຂວງສະຫວັນນະເຂດ; ຈາກນັ້ນ, ໄດ້ພ້ອມກັນເຊີດຊູຄວາມຮັບຜິດຊອບການເມືອງ, ສຸມສະຕິປັນຍາ, ຄວາມຮູ້ຄວາມສາມາດເຂົ້າໃນການຄົ້ນຄວ້າເນື້ອໃນ ເພື່ອກ້າວໄປເຖິງຄວາມເປັນເອກະພາບກ່ຽວກັບມາດຕະການ ແລະ ວິທີແກ້ໄຂບັນຫາຕ່າງໆ ຢ່າງສອດຄ່ອງ ແລະ ສ້າງຄວາມເປັນເອກະພາບສູງຕໍ່ກັບເນື້ອໃນທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ດ້ວຍປະສິດທິພາບ ແລະ ປະສິດທິຜົນສູງ.

# ສພຂ ສາລະວັນ ມອບ-ຮັບເຄື່ອງຊ່ວຍເຫຼືອ




(ສພຂ) - ວັນທີ 1 ທັນວາຜ່ານມາ ທີ່ສະພາປະຊາຊົນແຂວງສາລະວັນ, ໄດ້ມີພິທີມອບ-ຮັບເຄື່ອງຊ່ວຍເຫຼືອ ພະເຜດເຄື່ອງນຸ່ງຫົ່ມກັນໜາວ ຈາກຫ້ອງການກວດກາພັກເມືອງສາລະວັນ, ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງສາລະວັນ, ບໍລິສັດ RONIEL ແລະ ມູນນິທິຮຸ່ງກິນນ້ຳລວມມູນຄ່າ242ລ້ານກວ່າກີບ ເພື່ອນຳໄປແຈກຢາຍມອບໃຫ້ກັບປະຊາຊົນຢູ່ເຂດຫ່າງໄກສອກຫຼີກ 3 ເມືອງພູດອຍຄື: ເມືອງຕຸ້ມລານ, ຕະໂອ້ຍ ແລະ ເມືອງສະໝ້ວຍ; ຕາງໜ້າມອບຂອງ ທ່ານ ສົມບັດ ໄຕຍະລາດ ປະທານກວດກາກາພັກເມືອງ, ທ່ານ ນາງ ວົງຈັນ ພັນທະວົງ ຜູ້ອຳນວຍການມູນຣິທິຮຸ້ງກິນນ້ຳປະຈຳແຂວງສາລະວັນ, ຕາງໜ້າຮັບໂດຍທ່ານ ສີເຮັ່ງ ຫອມສົມບັດ ປະທານສະພາປະຊາຊົນແຂວງ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມເປັນສັກຂີພະຍານ.

ພ້ອມນັ້ນ, ວັນທີ 3 ທັນວາຜ່ານມາ, ບໍລິສັດຈຳປາຂາວ ເມືອງຄົງເຊໂດນ ແລະ ໂຮງແຮມບຸນມີໄຊ ເມືອງຄົງເຊໂດນ, ໄດ້ມອບເຄື່ອງນຸ່ງຫົ່ມ ໃຫ້ ສພຂ ສາລະວັນລວມມູນຄ່າ 10 ລ້ານກີບ ເພື່ອນຳໄປແຈກຢາຍມອບໃຫ້ກັບປະຊາຊົນຢູ່ເຂດຫ່າງໄກສອກຫຼີກ 3 ເມືອງພູດອຍຄື: ເມືອງຕຸ້ມລານ, ຕະໂອ້ຍ ແລະ ເມືອງສະໝ້ວຍ ຕາງໜ້າມອບໂດຍ ບໍລິສັດຈຳປາຂາວ ແລະ ໂຮງແຮມບຸນມີໄຊ ແລະ ຕາງໜ້າຮັບໂດຍທ່ານສົມພອນແສງສຸລິຈັນ ຄະນະປະຈຳສະພາປະຊາຊົນແຂວງ ເລຂາທິການສະພາປະຊາຊົນແຂວງສາລະວັນ ພ້ອມດ້ວຍຄະນະເຂົ້າຮ່ວມເປັນສັກຂີພະຍານ.

**(ຄະນະໂຄສະນາອົບຮົມແຂວງ - ຈັນທີ ດວງປັນຍາ)**

# ຄສຊ ຕີລາຄາຄືນການຈັດຕັ້ງປະຕິບັດວຽກງານ 5 ປີ




(ສພຂ) ກອງປະຊຸມຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ ປະຈຳປີ 2025 ໄດ້ດຳເນີນໃນວັນທີ 30 ທັນວາຜ່ານມາ ໂດຍການເປັນປະທານຂອງທ່ານ ດົງເຜັດ ພະຍົນ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ, ປະທານສະພາປະຊາຊົນແຂວງ; ມີສະມາຊິກສະພາແຫ່ງຊາດ(ສສຊ) ປະຈຳເຂດເລືອກຕັ້ງທີ 16, ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ແຂກຖືກເຊີນເຂົ້າຮ່ວມ.

ທ່ານ ປອ. ແພງສີ ສີລາວິ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ ໄດ້ຕີລາຄາຄືນການຈັດຕັ້ງປະຕິບັດວຽກງານ ຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 16 ປະຈຳ 5 ປີ (2021-2025), ປະຈຳປີ 2025 ແລະ ຮ່າງແຜນການເຄື່ອນໄຫວວຽກງານ 5 ປີ (2026-2030), ປະຈຳປີ 2026; ພ້ອມນີ້, ກອງປະຊຸມຍັງໄດ້ຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງສ້າງສັນ ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນລະຫວ່າງສສຊປະຈຳເຂດເລືອກຕັ້ງທີ 16 ແລະ ບັນດາ ສສຂ ເຊກອງ ເພື່ອພ້ອມກັນແກ້ໄຂບັນດາຈຸດອ່ອນຂໍ້ຄົງຄ້າງ ແລະ ເສີມຂະຫຍາຍດ້ານດີທີ່ຕັ້ງໜ້າເພື່ອຍົກສູງວຽກງານພາຍໃຕ້ລັດບໍລິຫານ ເຮັດໃຫ້ລັດແຫ່ງກົດໝາຍນັບມື້ເຕີບໃຫຍ່ເຂັ້ມແຂງ ແລະ ໜັກແໜ້ນ.

**(ນາລີວັນ)**




# ຮ່ຳຮຽນເຊື່ອມຊຶມ ຄຳກ່າວໄວ້ຂອງເພິ່ນ...

**# ທິດດີ**

ວັນທີ 13 ທັນວາ ປີ 2025 ເປັນໜຶ່ງໃນເຫດການປະຫວັດສາດຂອງຊາດລາວເຮົາ ນັ້ນຄື: ວັນເກີດຄົບຮອບ 105 ປີ ຂອງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ເຄົາລົບຮັກຂອງປະຊາຊົນລາວບັນດາເຜົ່າ, ແນ່ນອນການຈັດຕັ້ງສະເຫຼີມສະຫຼອງເປັນທາງການແມ່ນໄດ້ດຳເນີນມາກ່ອນໜ້ານີ້ແລ້ວໃນຫຼາຍຮູບການ ພົ້ນເດັ່ນກໍຄືແມ່ນການປາຖະກະຖາຊີວິດ ແລະ ຜົນງານຂອງເພິ່ນ; ແຕ່ຜູ້ຂຽນຢາກຍົກບັນຫາທີ່ເພິ່ນເຄີຍກ່າວໄວ້ກ່ຽວກັບການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ-ລັດ ເພື່ອໃຫ້ບັນລຸຜົນສຳເລັດສູງສຸດ, ເພິ່ນກ່າວໄວ້ວ່າ: ບັນຫາການຈັດຕັ້ງປະຕິບັດ ທັງເປັນວິທະຍາສາດ ທັງເປັນສິລະປະ ມັນເປັນວິທະຍາສາດກໍຍ້ອນວ່າ ຢາກຈັດຕັ້ງປະຕິບັດໄດ້ດີແມ່ນຕ້ອງເຊື່ອມຊຶມແນວທາງແລະທັດສະນະຂອງພັກ, ຕ້ອງກຳສະພາບຕົວຈິງໃຫ້ຊັດເຈນ, ຮູ້ໄຈ້ແຍກສະພາບການຕົວຈິງຢ່າງສັດຈະວິພາກ; ຈາກນັ້ນ, ຈຶ່ງຈະສາມາດວາງແຜນນະໂຍບາຍໂຄງການເຄື່ອນໄຫວ ແລະ ເລືອກເອົາໂຄງການທີ່ດີເລີດໄດ້ໝາຍຄວາມວ່າໂຄງການທີ່ສິ້ນເປືອງແຮງງານໜ້ອຍສຸດ ແຕ່ຫາກບັນລຸປະສິດທິຜົນສູງສຸດ, ບົນພື້ນຖານດັ່ງກ່າວນັ້ນ ຈຶ່ງຈັດວາງສັບຊ້ອນກຳລັງເຂົ້າສູ່ການກະທຳຕົວຈິງ.

ບັນຫາຈັດຕັ້ງປະຕິບັດເປັນສິລະປະ ກໍຍ້ອນວ່າໃນເມື່ອໄດ້ວາງແຜນນະໂຍບາຍໂຄງການ ແລະ ຈັດວາງກຳລັງແລ້ວ ຕ້ອງຮູ້ຈັກກຳເອົາກາລະໂອກາດທີ່ອຳນວຍເພື່ອເຄື່ອນໄຫວໃຫ້ຖືກກັບກາລະໂອກາດນັ້ນ ຕ້ອງຮູ້ນຳໃຊ້, ຮູ້ສົມທົບທຸກກຳລັງແລະການເຄື່ອນໄຫວທຸກດ້ານຢ່າງເຂົ້າແກັບເຂົ້າເກຍແລະເປັນຈັງຫວະດຽວກັນ, ຮູ້ວາງນະໂຍບາຍໄມ້ງັດອອກ ໂດຍກຳແໜ້ນບັນດາການພົວພັນທາງດ້ານຜົນປະໂຫຍດ ເພື່ອປຸກລະດົມມະຫາຊົນ ຊຸກຍູ້ຂະບວນການໃນແຜນການເຄື່ອນໄຫວນັ້ນ ຕ້ອງມີການກຳນົດອັນໃດເປັນຈຸດໜັກ ອັນໃດເປັນຈຸດທົ່ວໄປແລະຕ້ອງຮູ້ຊອກຮ່ຳຮຽນສ້າງແບບຢ່າງ ແລະ ແຜ່ຂະຫຍາຍແບບຢ່າງນັ້ນ ອອກຢ່າງກວ້າງຂວາງ... (ໄກສອນ ພົມວິຫານ ນິພົນເລືອກເຟັ້ນ ເຫຼັ້ມ 3 ໜ້າທີ 120-121).

ຫາກເພື່ອນຜູ້ອ່ານຕິດຕາມກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດຄັ້ງສຸດທ້າຍຄືຄັ້ງທີ 10 ທີ່ຜ່ານມາ ຈະເຫັນວ່າສະພາແຫ່ງຊາດ ຊຸດທີ IX ມີຫຼາຍຜົນງານພົ້ນເດັ່ນ, ຜູ້ຂຽນຂໍອະນຸຍາດສັງລວມເອົາເອງໃນຈຸດທີ່ພໍ່ແມ່ປະຊາຊົນໃຫ້ຄວາມຊົມເຊີຍຕໍ່ ສສຊ ທີ່ໄດ້ຕາງໜ້າພວກເພິ່ນ ມີຄຳເຫັນຕໍ່ກອງປະຊຸມສະພາຄັ້ງນີ້.

**ອັນທີໜຶ່ງ:** ແມ່ນພວກເພິ່ນຍ້ອງຍໍສັນລະເສີນການຜ່ານມະຕິກ່ຽວກັບການກໍ່ສ້າງ ແລະ ປັບປຸງກົດໝາຍ ເພາະມັນແມ່ນພື້ນຖານທີ່ຈະສ້າງລັດເຮົາເປັນລັດແຫ່ງກົດໝາຍເທື່ອລະກ້າວ.

**ອັນທີສອງ:** ການຕິດຕາມກວດກາມະຕິຂອງສະພາແຫ່ງຊາດ ທີ່ມອບໃຫ້ລັດຖະບານຈັດຕັ້ງປະຕິບັດ ແມ່ນມີຄຳເຫັນຢ່າງກວ້າງຂວາງໃນທຸກທີ່ ເຫັນວ່າຍັງຈັດຕັ້ງປະຕິບັດບໍ່ໄດ້ດີເທົ່າທີ່ຄວນ... ແນ່ນອນວ່າການຈັດຕັ້ງປະຕິບັດຂອງລັດຖະບານກໍມີຜົນສຳເລັດຫຼາຍດ້ານເຊັ່ນກັນ.

ພຽງແຕ່ຍົກບັນຫາຂ້າງເທິງຂຶ້ນມາ ກໍສາມາດເວົ້າໄດ້ວ່າບັນຫາການຈັດຕັ້ງປະຕິບັດມະຕິຂອງສະພາແຫ່ງຊາດ ຍັງບໍ່ທັນປະສົບຜົນສຳເລັດສູງສຸດ. ສະນັ້ນ, ຜູ້ຂຽນຈຶ່ງຂໍນຳສະເໜີຄຳກ່າວໄວ້ຂອງປະທານ ໄກສອນ ພົມວິຫານ ມາໃຫ້ພວກເຮົາໄດ້ຮ່ຳຮຽນ, ຄິດທຶງວ່າ ອັນໃດຍັງບໍ່ທັນເຮັດໄດ້ດີເພື່ອເສີມຂະຫຍາຍຈຸດດີ ແລະ ແກ້ໄຂຂໍ້ບົກຜ່ອງໃຫ້ຫຼຸດນ້ອຍຖອຍລົງ...

ປະທານ ໄກສອນ ພົມວິຫານ ຍືນຍົງໃນພາລະກິດປະຕິວັດຕະຫຼອດໄປ.

## ຜົນກອງປະຊຸມ...

(ຕໍ່ຈາກໜ້າ 2)

ການຂົນຂວາຍແຫຼ່ງທຶນຈາກສາກົນ ແລະ ການມີສ່ວນຮ່ວມຂອງທຸກພາກ ສ່ວນໃນສັງຄົມ ເປັນຕົ້ນ: ສຳເລັດການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ, ເສັ້ນທາງລົດໄຟ ລາວ-ໄທ ໄລຍະ 2, ສາມາດຟື້ນຟູ-ຍົກລະດັບເສັ້ນທາງເລກທີ 13 ໃຕ້, 13 ເໜືອ, ເລກ 8 ແລະເສັ້ນທາງອື່ນໆລວມຄວາມຍາວ 400 ກວ່າກິໂລແມັດ; ສຳເລັດການຂຶ້ນທະບຽນອອກໃບຕາດິນ 796 ພັນກວ່າຕອນ ເທົ່າກັບ 50% ຂອງແຜນການ 5 ປີ; ໄດ້ສຸມໃສ່ປັບປຸງຄຸນນະພາບການສຶກສາ, ປັບປຸງຫຼັກສູດແລະຮູບແບບການຮຽນ-ການສອນ, ຍົກລະດັບຄວາມສາມາດຂອງຄູ-ອາຈານ, ປະຕິບັດນະໂຍບາຍ ແລະ ມາດຕະການແກ້ໄຂບັນຫາການຂາດແຄນຄູສອນ, ການປະລະການຮຽນແລະການສົ່ງເສີມເຂົ້າຮຽນວິຊາຊີບ ສຳເລັດໂດຍພື້ນຖານ; ໄດ້ສຸມໃສ່ປັບປຸງ ແລະ ຍົກລະດັບຕາໜ່າງການບໍລິການສາທາລະນະສຸກໃນທົ່ວປະເທດ ໂດຍກໍ່ສ້າງຍົກລະດັບພື້ນຖານໂຄງລ່າງ ແລະ ພັດທະນາບຸກຄະລາກອນທາງການແພດ ທັງຢູ່ສູນກາງ ແລະ ທ້ອງຖິ່ນ; ສຳເລັດໂດຍພື້ນຖານການປັບປຸງກົງຈັກການຈັດຕັ້ງ ຕາມມະຕິຂອງສູນກາງພັກ ເລກທີ 03/ຄບສພ ແລະ ມະຕິຂອງສະພາແຫ່ງຊາດ ເລກທີ 05/ສພຊ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ, ທັງໄດ້ສຸມໃສ່ສ້າງນິຕິກຳຕ່າງໆ ໃນການສ້າງຕັ້ງຕາແສງ ເຊິ່ງມີທັງໝົດ 640 ຕາແສງໃນທົ່ວປະເທດ; ໄດ້ເອົາໃຈໃສ່ເພີ່ມທະວີການຮ່ວມມືກັບບັນດາປະເທດເພື່ອນມິດແລະຄູ່ຮ່ວມພັດທະນາໂດຍເປັນເຈົ້າການເຂົ້າຮ່ວມແລະຈັດຕັ້ງປະຕິບັດຂອບການຮ່ວມມືຕ່າງໆຂອງສາກົນ, ອັນພົ້ນເດັ່ນແມ່ນສຳເລັດການເປັນເຈົ້າພາບຈັດກອງປະຊຸມສຸດຍອດອາຊຽນຄັ້ງທີ 44, 45 ແລະ ບັນດາກອງປະຊຸມສຸດຍອດທີ່ກ່ຽວຂ້ອງ ໄດ້ຮັບຜົນສຳເລັດອັນຈົບງາມ, ເຮັດໃຫ້ບົດບາດແລະອິດທິພົນຂອງ ສປປລາວໃນເວທີພາກພື້ນແລະສາກົນ ໄດ້ຮັບການຍົກສູງຂຶ້ນກວ່າເກົ່າ, ສາມາດນຳເອົາຜົນປະໂຫຍດ ແລະ ໝາກຜົນສຳເລັດຕົວຈິງ ມາໃຫ້ປະເທດຫຼາຍຂຶ້ນ.

ສຳລັບແຜນວຽກຈຸດສຸມປີ2026ຂອງລັດຖະບານ, ກອງປະຊຸມໄດ້ຊີ້ນຳຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ບັນດາວຽກງານສຳຄັນດັ່ງນີ້:

ສຸມໃສ່ປະຕິບັດ 7 ທິດທາງລວມ, ບັນດາຄາດໝາຍ ແລະ 6 ເປົ້າໝາຍ ທີ່ໄດ້ກຳນົດໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ໂດຍສະເພາະໃຫ້ເສດຖະກິດຂະຫຍາຍຕົວສະເລ່ຍ 6% ຕໍ່ປີຂຶ້ນໄປ, ລາຍຮັບສະເລ່ຍຕໍ່ຫົວຄົນ ໃຫ້ໄດ້3,104 ໂດລາ, ລວມຍອດລາຍໄດ້ແຫ່ງຊາດ (GNI) ຕໍ່ຫົວຄົນ ໃຫ້ໄດ້ 2,914 ໂດລາ ໃນປີ 2030.

ສືບຕໍ່ສຸມໃສ່ຮັບປະກັນສະຖຽນລະພາບທາງດ້ານການເມືອງໃຫ້ໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ ໂດຍເອົາໃຈໃສ່ຈັດຕັ້ງປະຕິບັດແຜນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການສ້າງຮາກຖານການເມືອງ-ພັດທະນາຊົນນະບົດ, ແກ້ໄຂຄວາມຫຍຸ້ງຍາກຂອງປະຊາຊົນ ຕິດພັນວຽກງານ 3 ສ້າງ, ພ້ອມທັງສຸມໃສ່ສະກັດກັ້ນ ແລະ ແກ້ໄຂປາກົດການຫຍໍ້ທໍ້ຕ່າງໆ.

ສືບຕໍ່ປະສານສົມທົບກັບສະພາແຫ່ງຊາດ ເພື່ອກະກຽມການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V; ກະກຽມສ້າງແຜນດຳເນີນງານ, ສ້າງລະບຽບການແລະກົນໄກການເຮັດວຽກຂອງລັດຖະບານ ຊຸດທີ X; ກະກຽມລາຍງານຕໍ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X.

ສືບຕໍ່ຕິດຕາມ, ຊຸກຍູ້ ແລະ ກວດກາ ການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ (ສອຈ) ໃນໄລຍະໃໝ່ ໃຫ້ແຂງແຮງ ແລະ ເປັນຮູບປະທຳຫຼາຍຂຶ້ນ.

ສືບຕໍ່ຈັດຕັ້ງປະຕິບັດບັນດາມາດຕະການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ຕາມແຜນວຽກຂອງຄະນະ 19/ກມສພ ເປັນຕົ້ນ: ສືບຕໍ່ຊຸກຍູ້ ແລະ ສົ່ງເສີມການຜະລິດພາຍໃນເພື່ອທົດແທນການນຳເຂົ້າ, ການຄຸ້ມຄອງລາຄາສິນຄ້າ, ສູ້ຊົນເກັບລາຍຮັບງົບປະມານແຫ່ງລັດປີ 2026 ໃຫ້ໄດ້ບໍ່ຫຼຸດ 20% ຂອງ GDP ຕາມທິດ ສອຈ, ຕ້ານການຮົ່ວໄຫຼຂອງງົບປະມານ, ເລັ່ງແກ້ໄຂໜີ້ສິນສາທາລະນະໃຫ້ຫຼຸດລົງ, ປະຕິບັດລາຍຈ່າຍງົບປະມານບົນຈິດໃຈປະຢັດ; ສືບຕໍ່ຄຸ້ມຄອງອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ ໃຫ້ມີສະຖຽນລະພາບ; ປະຕິບັດນະໂຍບາຍຕ່າງໆ ຍົກສູງຄ່າຂອງເງິນກີບ, ສ້າງກົນໄກນຳໃຊ້ສະກຸນເງິນທ້ອງຖິ່ນ ເຂົ້າໃນການຊຳລະສິນຄ້າແລະບໍລິການຢູ່ ສປປລາວ ກັບບັນດາປະເທດອ້ອມຂ້າງ ແລະ ປະເທດຄູ່ຄ້າແບບສອງຝ່າຍ.

ສືບຕໍ່ສຸມໃສ່ບັນດາໂຄງການພະລັງງານໄຟຟ້າສະອາດ ແລະພະລັງງານໄຟຟ້າທາງເລືອກ, ຍູ້ແຮງການພັດທະນາ ແລະ ລົງທຶນກໍ່ສ້າງສາຍສົ່ງໄຟຟ້າແຮງສູງເຊື່ອມຕໍ່ພາຍໃນ ແລະ ປະເທດອ້ອມຂ້າງ, ສືບຕໍ່ເຂັ້ມງວດໃນການຄຸ້ມຄອງບັນດາໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ທັງສົ່ງເສີມການປຸງແຕ່ງແຮ່ທາດເປັນຜະລິດຕະພັນສຳເລັດຮູບກ່ອນສົ່ງອອກ, ເອົາໃຈໃສ່ຕິດຕາມແລະຄຸ້ມຄອງດ້ານສິ່ງແວດລ້ອມໃຫ້ດີ, ປະຕິບັດມາດຕະການເຂັ້ມງວດຕໍ່ໂຄງການແຮ່ທາດທີ່ຖືກຈັດໃນປະເພດອ່ອນ ແລະ ອ່ອນຫຼາຍ; ສຸມໃສ່ພັດທະນາພື້ນຖານໂຄງລ່າງເສັ້ນທາງຄົມມະນາຄົມທາງບົກ, ທາງລາງ, ທາງນ້ຳ ແລະ ທາງອາກາດ ຕາມແລວທາງເສດຖະກິດຕ່າງໆ ໃຫ້ແຂງແຮງທົນທານ.

ສືບຕໍ່ສຸມໃສ່ປັບປຸງຄຸນນະພາບການຮຽນ-ການສອນໃນທຸກຊັ້ນທຸກສາຍ, ສືບຕໍ່ປະຕິບັດນະໂຍບາຍແກ້ໄຂການຂາດແຄນຄູ ແລະ ການປະລະການຮຽນ, ກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການນຳໃຊ້ລະບົບຫຼັກສູດສາມັນ ສຶກສາ (6+3+3) ໃນສົກຮຽນປີ 2028-2029.

ສຸມໃສ່ພັດທະນາແຮງງານໃຫ້ມີສີມື ແລະ ເຂົ້າສູ່ຕະຫຼາດແຮງງານທັງພາຍໃນ ແລະ ຕ່າງປະເທດ, ພັດທະນາລະບົບຂໍ້ມູນຂ່າວສານຕະຫຼາດແຮງງານທີ່ທັນສະໄໝ; ສືບຕໍ່ເອົາໃຈໃສ່ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີຕໍ່ພາລະກິດປະຕິວັດຊາດປະຊາທິປະໄຕ.

ສືບຕໍ່ສຸມໃສ່ປັບປຸງໂຄງລ່າງດ້ານສາທາລະນະສຸກ ທັງສູນກາງ ແລະ ທ້ອງຖິ່ນ, ຂະຫຍາຍກອງທຶນປະກັນສັງຄົມ ແລະ ປະກັນສຸຂະພາບ ໃຫ້ຫຼາຍຂຶ້ນ, ສະກັດກັ້ນ ແລະ ເຝົ້າລະວັງການແຜ່ລະບາດຂອງພະຍາດຕ່າງໆຕາມລະດູການ.

ສືບຕໍ່ສົ່ງເສີມ ແລະ ອະນຸລັກວັດທະນະທຳ ແລະ ຮີດຄອງປະເພນີຂອງຊາດ, ຊຸກຍູ້ສົ່ງເສີມການທ່ອງທ່ຽວ ທັງປັບປຸງພື້ນຖານໂຄງລ່າງການທ່ອງທ່ຽວໃຫ້ມີຄວາມສະດວກ ແລະ ປອດໄພ.

ສືບຕໍ່ສຸມໃສ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຢູ່ບັນດາເຂດຈຸດສຸມ, ຈັດສັນພູມລຳເນົາ ແລະ ອາຊີບຄົງທີ່ໃຫ້ປະຊາຊົນ ທີ່ຢູ່ເຂດຫ່າງໄກສອກຫຼີກແລະເຂດພື້ນຖານການປະຕິວັດໃນເມື່ອກ່ອນ.

ສືບຕໍ່ປັບປຸງກົງຈັກການຈັດຕັ້ງຂອງທ້ອງຖິ່ນ ໄປຄຽງຄູ່ກັບການແບ່ງຂັ້ນຄຸ້ມຄອງ, ການສ້າງລະບຽບກົນໄກການເຮັດວຽກຂອງອົງການປົກຄອງທ້ອງຖິ່ນ; ສືບຕໍ່ຈັດຕັ້ງປະຕິບັດນິຕິກຳຕ່າງໆ ໃນການສ້າງຕັ້ງຕາແສງໃຫ້ສຳເລັດ.

ເລັ່ງປັບປຸງກົນໄກ ແລະ ວິທີການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ສຳເລັດ ແລະ ປິດສຳນວນຄະດີ ໃຫ້ໄດ້ຫຼາຍຂຶ້ນ; ສືບຕໍ່ສ້າງ ແລະ ປັບປຸງກົດໝາຍຕາມແຜນທີ່ສະພາແຫ່ງຊາດຮັບຮອງ ໃຫ້ມີຄວາມຮັດກຸມ ແລະ ມີປະສິດທິຜົນສູງຂຶ້ນ.

ສຸມໃສ່ຈັດຕັ້ງຜັນຂະຫຍາຍຜົນກອງປະຊຸມສຸດຍອດຕ່າງໆ, ຜົນການເຄື່ອນໄຫວວຽກງານຕ່າງປະເທດຂອງການນຳພັກ-ລັດ, ແຜນຮ່ວມມືສອງຝ່າຍກັບບັນດາປະເທດເພື່ອນມິດຍຸດທະສາດ ແລະ ຂອບການຮ່ວມມືຫຼາຍຝ່າຍໃນອະນຸພາກພື້ນໃຫ້ເປັນຮູບປະທຳຫຼາຍຂຶ້ນ; ສືບຕໍ່ເຄື່ອນໄຫວການຕ່າງປະເທດຢ່າງມີໄຫວພິບແລະທັນສະພາບການ, ຮັບປະກັນຜົນປະໂຫຍດຂອງຊາດ ແລະ ບົນຈິດໃຈປະຢັດມັດທະຍັດ.

ວາລະທີ 2: ກອງປະຊຸມເຫັນດີດ້ານຫຼັກການຮັບຮອງເອົາລາຍງານຄວາມຄືບໜ້າການຈັດຕັ້ງຜັນຂະຫຍາຍມະຕິວ່າດ້ວຍສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ໃນໄລຍະໃໝ່ ແລະ ຮ່າງມະຕິວ່າດ້ວຍການແບ່ງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດມະຕິວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່ສະບັບປັບປຸງ.

ວາລະທີ 3: ກອງປະຊຸມເຫັນດີດ້ານຫຼັກການຮັບຮອງເອົາຮ່າງດຳລັດວ່າດ້ວຍການກຳນົດໜ້າວຽກ ແລະ ການແບ່ງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດແລະແຜນເງິນຕາ ປະຈຳປີ 2026 ແລະ ແຜນການແກ້ໄຂຜົນການກວດກາ-ກວດສອບ.

ວາລະທີ 4: ກອງປະຊຸມເຫັນດີດ້ານຫຼັກການຮັບຮອງເອົາລາຍງານບັນດາໂຄງການທີ່ສຳຄັນຈຳນວນໜຶ່ງຄື: ການອອກແບບ, ກໍ່ສ້າງ, ລະດົມທຶນ ແລະ ດຳເນີນກິດຈະການໂຄງການທາງລົດໄຟ ລາວ-ຫວຽດນາມ ໄລຍະທີ 1 ແຕ່ຕົວເມືອງທ່າແຂກ ແຂວງຄຳມ່ວນ ຫາ ມູເກຍ ຊາຍແດນ ລາວ-ຫວຽດນາມ ໄລຍະທາງ 147 ກິໂລແມັດ ໃນຮູບແບບກໍ່ສ້າງ, ດຳເນີນງານ ແລະ ມອບໂອນ (BOT) ລວມທັງຜົນການເຈລະຈາສັນຍາສຳປະທານ CA ຂອງໂຄງການດັ່ງກ່າວ; ແຜນບຸລິມະສິດໃນການກໍ່ສ້າງ ແລະ ປັບປຸງເສັ້ນທາງໃນປີ 2026, ໂຄງການທາງດ່ວນ ໂດຍສະເພາະກົນໄກ ແລະ ວິທີຈັດຕັ້ງປະຕິບັດຕົວຈິງ.

ວາລະທີ 5: ກອງປະຊຸມເຫັນດີດ້ານຫຼັກການຮັບຮອງເອົາແຜນປະຕິບັດຕົວຈິງໃນການຫັນການເກັບລາຍຮັບເປັນທັນສະໄໝ ສຳລັບປີ 2026.

**(ຂ່າວ ແລະ ພາບ: ກົມປະຊາສຳພັນ ຫສນຍ)**



ສຸກສະບາຍຫາຍໂຣຄ

# ອາການ ແລະ ວິທີປ້ອງກັນ ການເກີດພາວະປະສາດຫູເສື່ອມ

**# ຮຽບຮຽງໂດຍ: ດອກຄາຍ**




ພາວະຫູເສື່ອມ ແມ່ນອາການທີ່ປະສາດການໄດ້ຍິນໜ້ອຍລົງ ຫຼື ບໍ່ໄດ້ຍິນເລີຍ ສ່ວນຫຼາຍມັກເກີດກັບຄົນອາຍຸຫຼາຍທີ່ຮ່າງກາຍເສື່ອມໂຊມໄປຕາມການເວລາ ມັນກໍຈະຄ້າຍກັນກັບໂລກສາຍຕາສັ້ນ ເມື່ອອາຍຸຫຼາຍຂຶ້ນຖືວ່າເປັນໂລກປົກກະຕິ ທີ່ເກີດຂຶ້ນໄດ້ກັບທຸກຄົນ ມັນຂຶ້ນກັບການເບິ່ງແຍງຮັກສາຕົນເອງ ແຕ່ຈະມີບາງສາເຫດທີ່ອາດຈະພາໃຫ້ເກີດອາການຫູເສື່ອມເນື່ອງຈາກການຮັບຟັງສຽງດັງເປັນເວລາດົນນານ ຕົວຢ່າງ: ຄົນທີ່ມັກໃສ່ຫູຟັງແລ້ວເປີດເພງດັງໆ ຫຼື ອາດເກີດຈາກການໄດ້ຮັບເຊື້ອໄວຣັສ, ການເກີດອຸບັດຕິເຫດກໍມີສ່ວນເຮັດໃຫ້ປະສາດຫູເສື່ອມໄດ້ເຊັ່ນກັນ.

ອາການທີ່ສະແດງໃຫ້ເຫັນຈະແຈ້ງຄື: ເວລານອນຈະໄດ້ຍິນສຽງຊ່າໆ ຫຼື ມີສຽງດັງຢູ່ໃນຫູຄ່ອຍໆ ແລ້ວຮູ້ສຶກເຈັບຫູ ແລະ ປວດເພີ່ມຂຶ້ນຕາມລຳດັບຄວາມດັງຂອງສຽງ ຈົນກາຍເປັນອາການຄົນຫູອື້, ຫູກາຍ ຫຼື ມີອາການປວດຫູ ຫາກຄົນທີ່ມີອາການແບບນີ້ໝາຍຄວາມວ່າທ່ານກຳລັງເປັນໂລກຫູເສື່ອມນັ້ນເອງ.

ສຳລັບແນວທາງປ້ອງກັນນັ້ນ ຄວນຫຼີກລ່ຽງສະຖານທີ່ທີ່ມີສຽງດັງ ແລະ ງົດການໃຊ້ຫູຟັງ ສ່ວນແນວທາງໃນການຮັກສາທາງການແພດນັ້ນແມ່ນບໍ່ມີຫົນທາງຮັກສາໃຫ້ຫາຍຂາດ ມີແຕ່ວິທີການບັນເທົາອາການໃຫ້ຫຼຸດລົງເທົ່ານັ້ນ ເຊິ່ງມີທັງການກິນຢາ, ກິນວິຕາມິນ ແລະ ໃຊ້ເຄື່ອງຊ່ວຍຟັງແມ່ນເປັນວິທີທີ່ນິຍົມຫຼາຍທີ່ສຸດ.

**ແຫລ່ງຂໍ້ມູນຈາກ:**
**www.thaihealth.or.th**



ອາດ ກະວີລາວ

# ຢູ່ໃຫ້ເພິ່ນສັນເສີນ ໜີໃຫ້ຄົນຄຶດຮອດ

**# ລູກທາດສາມປາງ**

✻ ສ້າງຜົນງານເດັ່ນໄວ້
ຮັກຮໍ່ຊົມສັນເສີນ
ຄວາມດີຄຸມຄອງຄຸ້ມ
ຜົນງານຫຼາຍສະຫງ່າດ້ວຍ

ຍາມຢູ່ຄົນຍໍ
ຍົກແຍງນິຍົມຍ້ອງ
ນຳເຮົາອູ້ມຊ່ວຍ
ດີລ້ອນຊູອັນ

✻ ຄັນວ່າເຮົາບໍ່ເຕື້ອງ
ງານບໍ່ຂົນຂວາຍເຮັດ
ຖອຍຫຼັງນອນເນົາຄ້ານ
ປຽບຫອຍເດີນເຄື່ອນຊ້າ

ຕາຕໍ່ທຳການ
ມົດເມີນມາຍມ້ອຍ
ໂຍຍຍານລ້າລ່ອຍ
ຂາກ້າວອ່ອນແອ...ບໍ່ດີແລ້ວ!

✻ ແຕວ່າຍາມທ່ຽວຫຼິ້ນ
ຕາຮຸ່ງໃສມືນຫາ
ຍາມຄ່ຳຄືນເດີກຂ້ອນ
ຍາມເວັນນອນເມື່ອຍງ້ວງ

ຫັນແອ່ນໄວວາ
ຕື່ນມາພະລັນຈ້ອນ
ທະຍານຈອນໄປປ່ວງ
ຂວາງຂ້າງເສື່ອໝອນ

✻ ອ່ອນເພຍຍາມຮຸ່ງເຊົ້າ
ປຽບດັ່ງຄານມາສວາຍ
ຫຼົງວຽກໂຊເຊກ້າວ
ເໝືອນຄົນໂຊມປ່ວງບ້າ

ສະເໜີເຕົ່າທຳງານ
ໄຕ່ບີນປານບົ້ງ
ເມົາຢາເຫຼືອງຫຼ່າ
ຫັນໜ້າອວ່າຍຫຼັງ

✻ ຍາມເຮົາຍັງຮ່ວມບ້ານ
ບາກບັ່ນທຳຄວາມດີ
ຜົນງານແຖມເປັນເສົາຄ້ຳ
ຄັນໃຜຄືດັ່ງເວົ້າ

ດອມເພິ່ນຄວນຂະຫຍັນ
ໃສ່ຕົນຕາມແຕ້ມ
ຄຸນນະທຳສັດຊື່
ເມືອໜ້າຍ່ອມຈະເລີນ

✻ ຍາມຢູ່... ໃຫ້ເພິ່ນຊົມຊື່ນຍ້ອງ
ເອົາຜົນງານປະດັບສີ
ຍາມຫ່າງຄົນຄະນິງໜ້າ
ຄວາມດີ... ມັນບໍ່ພັງເປື່ອຍລົ້ມ

ຍໍຍື່ນແຍງເຮົາ
ສ່ວນດີຕົນສ້າງ
ຖາມຫາຈາຈົ່ມ
ສູນຖິ້ມເສື່ອມຫາຍ... ດອກນາ!



ໜັກຫາຍ ລະບາຍ

## (ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

**# ສຽມທຽນ**

✻ **ສະ**ພາແຫ່ງຊາດ ແລະ ສະພາປະຊາຊົນແຂວງທົ່ວປະເທດ ພວມຊຸບຊຽວ ແລະ ເລັ່ງມືກະກຽມເຄື່ອນໄຫວໃສ່ວຽກງານເລືອກຕັ້ງ ຍັງບໍ່ດົນຫາກຊິໄດ້ ເລືອກຜູ້ແທນໃໝ່ຕາມປະສົງ ແລ້ວບໍ! ຄົງບໍ່ນານເກີນລໍ ໂອກາດນໍ່ມາຫຍັບໃກ້ ກຽມຈິດໃຈເຄິດພີ່ນ້ອງ ເລືອກເອົາຜູ້ແທນເພື່ອໃຫ້ຈາເອົ້າຢູ່ສະພາ **ທ່ານເອີຍ!**

✻ **18** ມັງກອນ 2012 ແມ່ນມື້ ໜັງສືພິມຜູ້ແທນປະຊາຊົນ ອອກສູ່ສາຍຕາມວນຊົນ ແຕ່ເໜືອຕະຫຼອດໃຕ້ ຊອບ **13 ປີ** ຮັບໃຊ້ ຄຽງຄູ່ສະພາ ບ່າເຫດການມາບັນຍາຍສູ່ສາຍຕາສັງຄົມກວ້າງ ທັງແລວຂວາງແລວຕັ້ງ ຂອງ ສສ ຢ່າງສະຫງ່າ ຊຽນບົດຄວາມຂ່າວຈະແຈ້ງ ບໍ່ມີຂ້ອນເສື່ອງວ່າ **ທ່ານເອີຍ!** ຂໍອວຍພອນແດ່ເຈົ້າ ນັກຂ່າວທັງຫຼາຍ ໃນອົງການຂີດຂຽນ ທົ່ວສະພາເໜືອ-ກາງ-ໃຕ້ ມິດສະຫາຍຄໍ່ລ່ຳພ້ອມ ເພື່ອນຮ່ວມງານທຸກກ້ຳຝ່າຍ ຈົ່ງສຸຂີລາບລົ້ນ ສົ່ງຜົນງານຢູ່ເລື້ອຍ ບໍ່ວາງເອັ້ນຫ່າງຫາຍ **ທ່ານເອີຍ!**

## ຊອບຍິ້ມ

**# ພົ້ງຄຶ່ງ**

## ເລື່ອງ: ທ່ານຜູ້ອຳນວຍການ

ນັກຮຽນ ປ4, ນາຍຄູບໍ່ມາຂຶ້ນຫ້ອງສອນ; ຫົວໜ້າຫ້ອງຈຶ່ງສັ່ງໃຫ້ພາກັນຫຼິ້ນເປັນອາຈານ

**ຫົວໜ້າຫ້ອງສັ່ງ:** "ບັກຈ້ອກ ມຶງເກັ່ງເລກ, ມຶງເປັນອາຈານສອນວິຊາຄະນິດສາດ; ບັກເຕ້ຍ ມຶງເຕະບານເກັ່ງ, ມຶງເປັນອາຈານພາລະສຶກສາ; ບັກແກ້ກ ມຶງມັກອ່ານໜັງສື, ມຶງສອນວິຊາພາສາລາວ"

ບັກເຈີດ ມັນກໍຢາກຫຼິ້ນນຳໝູ່, ຈຶ່ງຖາມຫົວໜ້າຫ້ອງວ່າ ຊິເປັນອາຈານຫຍັງດີ; ຫົວໜ້າຈຶ່ງບອກວ່າ "ມຶງມັກມາໂຮງຮຽນສວາຍ, ຂາດຮຽນດຸ ເຖິງມາກະບໍ່ຕັ້ງໃຈຮຽນ, ມຶງບໍ່ຕ້ອງສອນ... ມຶງເປັນຜູ້ອຳນວຍການໂຮງຮຽນເອົາເດີ້"555



## ສຸພາສິດ-ຄະຕິເຕືອນໃຈ

**#ດອກຫຍ້າ**

ບາດີຖາມຫາເຂົ້າປູກ
ລູກດີຖາມຫາພໍ່ແມ່

ລັດຖະສະພາຕ່າງປະເທດ

# Lee Wai-king ໄດ້ຮັບເລືອກຕັ້ງ ເປັນປະທານສະພານິຕິບັນຍັດຮົງກົງ

(Xinhua) - ລີ ໄຫວ-ຄິງ ໄດ້ຮັບເລືອກຕັ້ງເປັນປະທານສະພານິຕິບັນຍັດ(LegCo)ຊຸດທີVIII ຂອງເຂດບໍລິຫານພິເສດຮົງກົງ (Hong Kong Special Administrative Region - HKSAR), ສປຈີນ ເຊິ່ງໄດ້ຮັບ 47 ສຽງ ໃນການລົງຄະແນນປິດລັບໂດຍສະມາຊິກສະພາທັງໝົດ 90 ຄົນ ຫຼັງຈາກກອງປະຊຸມໃນຕອນເຊົ້າວັນພະຫັດທີ8 ມັງກອນຜ່ານມາ ເຊິ່ງນາງ ລີ ແລະ ຊານ ຊຸນ-ຢິງ (Chan Chun-ying) ຜູ້ຖືກສະເໜີຊື່ຮ່ວມ ໄດ້ອະທິບາຍຢ່າງລະອຽດກ່ຽວກັບນະໂຍບາຍຂອງພວກເຂົາ ແລະ ຕອບຄຳຖາມຈາກສະມາຊິກສະພາ.

ລີ ໃຫ້ຄຳໝັ້ນສັນຍາວ່າ ຈະປະຕິບັດໜ້າທີ່ຂອງຕົນຢ່າງຍຸຕິທຳໃນຖານະປະທານLegCo ລວມເຖິງມຸ່ງໝັ້ນທີ່ຈະເອົາຊະນະສິ່ງທ້າທາຍຕ່າງໆທີ່ອາດຈະເກີດຂຶ້ນກັບເມືອງນີ້; ນາງກ່າວວ່າ: ປີນີ້ ແມ່ນການເລີ່ມຕົ້ນຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2026-2030) ຄັ້ງທີ XV ຂອງປະເທດ ແລະ ສະພານິຕິບັນຍັດ ຈະຍຶດໝັ້ນແຜນດັ່ງກ່າວ ແລະ ສົ່ງເສີມການພັດທະນາເສດຖະກິດທີ່ມີຄຸນນະພາບສູງສຳລັບHKSAR ໂດຍຮ່ວມມືກັບລັດຖະບານຮົງກົງ.

ສະພານິຕິບັນຍັດ ຊຸດທີ VIII ເລີ່ມວາລະສີ່ປີໃນວັນທີ 1 ມັງກອນ 2026.



# ມີຜູ້ລົງທະບຽນໃຊ້ສິດເລືອກຕັ້ງທາງໄປສະນີ 1.53 ລ້ານຄົນ ໃນການເລືອກຕັ້ງຂອງບັງກລາເທດ




(Xinhua) - ມີຜູ້ລົງທະບຽນໃຊ້ສິດເລືອກຕັ້ງທາງໄປສະນີ ທັງໝົດ 1,533,682 ຄົນ ໃນການເລືອກຕັ້ງທົ່ວໄປຄັ້ງທີ 13 ແລະ ການລົງປະຊາມະຕິຂອງບັງກລາເທດ ທີ່ຈະຈັດຂຶ້ນໃນວັນທີ12 ກຸມພານີ້, ອີງຕາມຂໍ້ມູນຂອງຄະນະກຳມະການເລືອກຕັ້ງທີ່ເປີດເຜີຍເມື່ອວັນອັງຄານທີ 6 ມັງກອນຜ່ານມາ, ຂະບວນການລົງທະບຽນຜ່ານແອັບພລິເຄຊັນ "Postal Vote BD" ສິ້ນສຸດລົງຕອນທ່ຽງຄືນວັນຈັນ.

ມີຜູ້ລົງທະບຽນໃຊ້ສິດເລືອກຕັ້ງຫຼາຍກວ່າ 127 ລ້ານຄົນ ສຳລັບເລືອກຕັ້ງຄັ້ງທຳອິດນັບຕັ້ງແຕ່ອະດີດນາຍົກລັດຖະມົນຕີ ນາງ ເຊກ ຮາສີນາ (Sheikh Hasina) ລາອອກ ແລະ ເດີນທາງອອກນອກປະເທດໃນເດືອນສິງຫາ 2024.

ການເລືອກຕັ້ງທົ່ວໄປຄັ້ງທີ 13 ຂອງບັງກລາເທດ, ມີຜູ້ສະໝັກຮັບເລືອກຕັ້ງຈຳນວນຫຼາຍເຖິງ2,568 ຄົນ; ພັກການເມືອງ ແມ່ນກຸ່ມທີ່ມີຈຳນວນຜູ້ສະໝັກຫຼາຍທີ່ສຸດ ໂດຍມີ 51 ພັກ ທີ່ສົ່ງຜູ້ສະໝັກລົງແຂ່ງຂັນ 2,090 ຄົນ, ຂະນະທີ່ອີກ 478 ຄົນ ແມ່ນຜູ້ສະໝັກເອກະລາດ.

# Kazakhstan ຜ່ານກົດໝາຍ ເພື່ອຍົກລະດັບສິດທິທາງດິຈິຕອນ



(Xinhua) - ວັນທີ 9 ມັງກອນຜ່ານມາ, ຄັສຊີມ-ໂຈມາດ ໂທຄາເຢບ (Kassym-Jomart Tokayev) ປະທານາທິບໍດີ ແຫ່ງ ສາທາລະນະລັດ ຄາຊັກສະຖານ ໄດ້ລົງນາມໃນກົດໝາຍການປົກປ້ອງສິດທິທາງດິຈິຕອນຢ່າງຄົບຖ້ວນ, ລັດຖະບານກ່າວໃນຖະແຫຼງການ.

ປັດຈຸບັນ, ພົນລະເມືອງມີສິດທີ່ຈະ "ລຶບ, ບໍ່ລະບຸຊື່ ແລະ ຈຳກັດການປະມວນຜົນ" ຂໍ້ມູນສ່ວນຕົວຂອງຕົນ, ຖະແຫຼງການກ່າວຕື່ມວ່າ ເຕັກໂນໂລຊີຊີວະມິຕິ ຄວນໃຊ້ພາຍໃຕ້ເງື່ອນໄຂຕາມກົດໝາຍກຳນົດໄວ້ເທົ່ານັ້ນ.

ການບັງຄັບໃຊ້ກົດໝາຍສະບັບນີ້ ຊ່ວຍສ້າງຄວາມເຂັ້ມແຂງໃຫ້ແກ່ການຫັນປ່ຽນຂອງຄາຊັກສະຖານ ຈາກ "ວິ ທີແກ້ໄຂບັນຫາດິຈິຕອນແບບແຍກສ່ວນ ໄປສູ່ການຫັນປ່ຽນທາງດິຈິຕອນຢ່າງເປັນລະບົບ ໂດຍອີງໃສ່ຫຼັກການດ້ານຄວາມປອດໄພ, ຄວາມຮັບຜິດຊອບ ແລະ ການປົກປ້ອງສິດທິຂອງພົນລະເມືອງ" ຖະແຫຼງການກ່າວ.

ຖະແຫຼງການລະບຸວ່າ ປະທານາທິບໍດີ ໂທຄາເຢບ ໄດ້ປະກາດໃຫ້ປີ 2026 ເປັນປີແຫ່ງການຫັນປ່ຽນສູ່ດິຈິຕອນ ແລະ ປັນຍາປະດິດ; ປະມວນກົດໝາຍສະບັບນີ້ ໄດ້ວາງຂອບກົດໝາຍທີ່ຄົບຖ້ວນສຳລັບການພັດທະນາດິຈິຕອນທີ່ຍືນຍົງ ແລະ ປອດໄພຂອງປະເທດ, ໂດຍຄຳນຶງເຖິງຄວາມສົມດຸນລະຫວ່າງນະວັດຕະກຳ, ການນຳໃຊ້ປັນຍາປະດິດ, ແລະ ການປົກປ້ອງສິດທິຂອງພົນລະເມືອງ.

# ECZ ຢູ່ໃນຂັ້ນຕອນສຸດທ້າຍ ຂອງການກຳນົດເຂດເລືອກຕັ້ງ




(Xinhua) - ວັນທີ 12 ມັງກອນຜ່ານມາ, ອົງການເລືອກຕັ້ງຂອງຊຳບີ ກ່າວວ່າ ຂະນະນີ້, ກຳລັງຢູ່ໃນຂັ້ນຕອນສຸດທ້າຍຂອງການກະກຽມເພື່ອດຳເນີນການກຳນົດເຂດເລືອກຕັ້ງຄືນໃໝ່ ກ່ອນການເລືອກຕັ້ງທົ່ວໄປໃນເດືອນສິງ ຫາ 2026.

ບຣາວ ຄາຊາໂຣ (BrownKasaro) ຫົວໜ້າເຈົ້າໜ້າທີ່ການເລືອກຕັ້ງຂອງຄະນະກຳມະການເລືອກຕັ້ງແຫ່ງຊຳບີ (Electoral Commission of Zambia - ECZ) ກ່າວວ່າການກຳນົດເຂດເລືອກຕັ້ງຄືນໃໝ່ເຊິ່ງມີຈຸດປະ ສົງເພື່ອແບ່ງເຂດເລືອກຕັ້ງຂະໜາດໃຫຍ່ບາງແຫ່ງ, ຈະຖືກດຳເນີນດ້ວຍການເຂົ້າຮ່ວມຢ່າງເຕັມທີ່ຂອງຜູ້ມີສ່ວນຮ່ວມທັງໝົດທີ່ກ່ຽວຂ້ອງ; ຂະບວນການດັ່ງກ່າວ ຄາດວ່າຈະສຳເລັດກ່ອນການຮັບຮອງບັນຊີລາຍຊື່ການລົງທະບຽນຜູ້ມີສິດເລືອກຕັ້ງ ເຊິ່ງກຳນົດໄວ້ໃນວັນທີ30 ເມສາ, ອີງຕາມແຜນການເຮັດວຽກຂອງຄະນະກຳມະການ.

ເຂົາກ່າວໃນຖະແຫຼງການວ່າ "ຄະນະກຳມະການ ຮັບປະກັນຕໍ່ຜູ້ມີສ່ວນຮ່ວມວ່າ ກຳລັງເຮັດວຽກຢ່າງຮີບດ່ວນກ່ຽວກັບການກຳນົດເຂດເລືອກຕັ້ງຄືນໃໝ່ ເພື່ອໃຫ້ສຳເລັດກ່ອນການຮັບຮອງບັນຊີລາຍຊື່ການລົງທະບຽນຜູ້ມີສິດເລືອກຕັ້ງປີ 2026.

ປັດຈຸບັນ, ຊຳບີ ມີ 156 ເຂດເລືອກຕັ້ງ.

ການກຳນົດເຂດເລືອກຕັ້ງ ແມ່ນສອດຄ່ອງກັບລັດຖະທຳມະນູນສະບັບປັບປຸງຂອງຊຳບີ ແລະ ມີຈຸດປະສົງເພື່ອແກ້ໄຂບັນຫາເຂດເລືອກຕັ້ງທີ່ມີຂະໜາດໃຫຍ່ເກີນໄປ ເພື່ອສົ່ງເສີມການພັດທະນາ ແລະ ການເປັນຕົວແທນ.

# NPC ຈະເປີດກອງປະຊຸມປະຈຳປີ ໃນວັນທີ 5 ມີນານີ້



(Xinhua) - ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ (NPC) ຊຸດທີ XIV ຈະເປີດກອງປະຊຸມປະຈຳປີຄັ້ງທີ 4 ໃນວັນທີ 5 ມີນາ 2026, ອີງຕາມມະຕິຂອງຄະນະປະຈຳ NPC ເມື່ອວັນເສົາທີ 27 ທັນວາປີຜ່ານມາເຊິ່ງມະຕິດັ່ງກ່າວໄດ້ຮັບການອະນຸມັດໃນຕອນທ້າຍຂອງກອງປະຊຸມຄະນະປະຈຳ NPC ສະໄໝທີ 19 ທີ່ຈັດຂຶ້ນຕັ້ງແຕ່ວັນຈັນເຖິງວັນເສົາ.

ວາລະກອງປະຊຸມປະຈຳປີຂອງສະພາຜູ້ແທນປະຊາຊົນທົ່ວປະເທດຈີນທີ່ສະເໜີ ລວມມີການພິຈາລະນາບົດລາຍງານວຽກງານຂອງລັດຖະບານ, ຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ XV (2026-2030), ແລະບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດປີ 2025 ແລະ ຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປີ 2026; ນອກຈາກນັ້ນ, ຄາດວ່າຈະພິຈາລະນາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ຂອງທ້ອງຖິ່ນ ປີ 2025 ແລະ ຮ່າງແຜນງົບປະມານແຫ່ງລັດ ແລະ ຂອງທ້ອງຖິ່ນ ປີ 2026.

ອີງຕາມມະຕິ, ຄາດວ່າສະມາຊິກສະພານິຕິບັນຍັດ ຈະພິຈາລະນາຮ່າງປະມວນກົດໝາຍສິ່ງແວດລ້ອມ, ຮ່າງກົດໝາຍວ່າດ້ວຍການສົ່ງເສີມຄວາມສາມັກຄີແລະຄວາມກ້າວໜ້າຂອງບັນດາເຜົ່າ, ແລະ ຮ່າງກົດໝາຍວ່າດ້ວຍການວາງແຜນພັດທະນາແຫ່ງຊາດ; ພ້ອມທັງບົດລາຍງານວຽກງານຂອງຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ.

## ລາຍຊື່...

(ຕໍ່ຈາກໜ້າ 1)

ເລຂາທິການສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ ໄດ້ແຈ້ງຜົນການເລືອກຕັ້ງຄະນະບໍລິຫານງານສູນກາງພັກ ແລະ ຜົນກອງປະຊຸມຄັ້ງປະຖົມມະລຶກຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XII ໂດຍໄດ້ເລືອກຕັ້ງສະຫາຍ ທອງລຸນ ສີສຸລິດ ເປັນເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ສະໄໝທີ XII.

ຜົນການເລືອກຕັ້ງຄະນະບໍລິຫານງານສູນກາງພັກ ທີ່ໄດ້ຮັບການເລືອກຕັ້ງໃນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ປະກອບມີ:

ກຳມະການສູນກາງພັກ 73 ສະຫາຍ, ຍິງ 12 ສະຫາຍ ເຊິ່ງມີລາຍຊື່ດັ່ງນີ້:

1. ສະຫາຍ ທອງລຸນ ສີສຸລິດ
2. ສະຫາຍ ໄຊສົມພອນ ພົມວິຫານ
3. ສະຫາຍ ສອນໄຊ ສີພັນດອນ
4. ສະຫາຍ ຄຳພັນ ພົມມະທັດ
5. ສະຫາຍ ກິແກ້ວ ໄຂຄຳພິທູນ
6. ສະຫາຍ ພົນເອກ ວິໄລ ຫຼ້າຄຳຟອງ
7. ສະຫາຍ ນາງ ສີໃສ ລືເດດມູນສອນ
8. ສະຫາຍ ສະເຫຼີມໄຊ ກົມມະສິດ
9. ສະຫາຍ ຄຳພັນ ເຜີຍຍະວົງ
10. ສະຫາຍ ອານຸພາບ ຕູລາລົມ
11. ສະຫາຍ ທອງສະລິດ ມັງໜໍ່ເມກ
12. ສະຫາຍ ນາງ ສູນທອນ ໄຊຍະຈັກ
13. ສະຫາຍ ນາງ ວຽງທອງ ສີພັນດອນ
14. ສະຫາຍ ກອງແກ້ວ ໄຊສົງຄາມ
15. ສະຫາຍ ສອນທະນູ ທຳມະວົງ
16. ສະຫາຍ ວິໄລວົງ ບຸດດາຄຳ
17. ສະຫາຍ ເພັດ ພົມພິພັກ
18. ສະຫາຍ ສັນຕິພາບ ພົມວິຫານ
19. ສະຫາຍ ນາງ ບຸນຄຳ ວໍລະຈິດ
20. ສະຫາຍ ບົວຄົງ ນາມມະວົງ
21. ສະຫາຍ ນາງ ໃບຄຳ ຂັດຕິຍະ
22. ສະຫາຍ ອາລຸນໄຊ ສູນນະລາດ
23. ສະຫາຍ ນາງ ສວນສະຫວັນ ວິຍະເກດ
24. ສະຫາຍ ໂພໄຊ ໄຊຍະສອນ
25. ສະຫາຍ ລາວປາວຊົ່ງ ນະວົງໄຊ
26. ສະຫາຍ ພົນໂທ ຄຳລຽງ ອຸທະໄກສອນ
27. ສະຫາຍ ບຸນໂຈມ ອຸບົນປະເສີດ
28. ສະຫາຍ ຄຳຜອຍ ວັນນະສານ
29. ສະຫາຍ ເຫຼັກໄຫຼ ສີວິໄລ
30. ສະຫາຍ ຄຳໄຫຼ ສີປະເສີດ
31. ສະຫາຍ ວັນໄຊ ພອງສະຫວັນ
32. ສະຫາຍ ນາງ ອາລີ ວົງໜໍ່ບຸນທຳ
33. ສະຫາຍ ໄພວີ ສີບົວລິພາ
34. ສະຫາຍ ພູວົງ ອຸ່ນຄຳແສນ
35. ສະຫາຍ ບຸນຈັນ ສີວົງພັນ
36. ສະຫາຍ ທອງສະຫວັນ ພົມວິຫານ
37. ສະຫາຍ ໄຊຊະນະ ໂຄດພູທອນ
38. ສະຫາຍ ອາດສະພັງທອງ ສີພັນດອນ
39. ສະຫາຍ ລີເບີ ລີບົວປາວ
40. ສະຫາຍ ນາງ ບຸດສະດີ ທະນະເມືອງ
41. ສະຫາຍ ນາງ ປິ່ງຄຳ ລາຊະສິມມາ
42. ສະຫາຍ ພົນໂທ ວັນທອງ ກອງມະນີ
43. ສະຫາຍ ດາວວົງ ພອນແກ້ວ
44. ສະຫາຍ ມະໄລທອງ ກົມມະສິດ
45. ສະຫາຍ ບຸນຄົງ ຫຼ້າຈຽມພອນ
46. ສະຫາຍ ວັນສີ ກົວມົວ
47. ສະຫາຍ ວິໄລວັນ ບຸດດາຄຳ
48. ສະຫາຍ ລົບຄຳ ດວງສະຫວັນ
49. ສະຫາຍ ວຽງທະວິສອນ ເທບພະຈັນ
50. ສະຫາຍ ມອນໄຊ ລາວມົວຊົ່ງ
51. ສະຫາຍ ນາງ ອຳໄພວອນ ລ້ອມບຸນແພງ
52. ສະຫາຍ ພົນຈັດຕະວາ ນາງ ລີວົງ ລາວລີ
53. ສະຫາຍ ພອຍຄຳ ຮຸ່ງບຸນຍວງ
54. ສະຫາຍ ພົນຕີ ສົມພອນ ມິດຕະພອນ
55. ສະຫາຍ ບຸນຫຼາຍ ບຸດທີ
56. ສະຫາຍ ບຸນເລື່ອມ ມະນີວົງ
57. ສະຫາຍ ພົນຈັດຕະວາ ແປ້ນຄຳ ບຸດຈັນແພງ
58. ສະຫາຍ ບຸນເຫຼືອ ພັນດານຸວົງ
59. ສະຫາຍ ສັນຕິສຸກ ສິມມາລາວົງ
60. ສະຫາຍ ທອງລີ ສີສຸລິດ
61. ສະຫາຍ ພູທະນູເພັດ ໄຊສົມບັດ
62. ສະຫາຍ ພຸດພັນ ແກ້ວວົງໄຊ
63. ສະຫາຍ ເພັງນີລັນ ຄຳພັນເພັງ
64. ສະຫາຍ ບຸນເຖິງ ດວງສະຫວັນ
66. ສະຫາຍ ພົນໂທ ວົງສອນ ອິນປານພົມ
67. ສະຫາຍ ພົນໂທ ສາຍໃຈ ກົມມະສິດ
68. ສະຫາຍ ຜາຄຳ ອິນແສງ
69. ສະຫາຍ ຄຳລາວັນ ຈັນທະລາວັນ
70. ສະຫາຍ ນາງ ທຸມມາລີ ວົງພະຈັນ
71. ສະຫາຍ ສຸກຄຳເພັດ ເຮືອງບຸດສີ
72. ສະຫາຍ ພົນຈັດຕະວາ ຄອນສະຫວັນ ສົມພາໄຊ
73. ສະຫາຍ ໂພໄຊ ໄຂຄຳພິທູນ

ກຳມະການສຳຮອງສູນກາງພັກ 15 ສະຫາຍ, ຍິງ 1 ສະຫາຍ ເຊິ່ງມີລາຍຊື່ດັ່ງນີ້:

1. ສະຫາຍ ວາລະໄຊ ເລັ່ງສະຫວັດ
2. ສະຫາຍ ດາວສະຫວັນ ເຄືອມີໄຊ
3. ສະຫາຍ ມີໄຊ ພົມເຂ
4. ສະຫາຍ ຄຳມອນ ຈັນທະຈິດ
5. ສະຫາຍ ສຸລິວັດ ສຸວັນນະຈູມຄຳ
6. ສະຫາຍ ພົນຈັດຕະວາ ກອງສະຫວັດ ບຸນລ້ຽງ
7. ສະຫາຍ ຈິນດາວົງ ໂພສີຄຳ
8. ສະຫາຍ ພິໄລທອງ ຈິດມະນີ
9. ສະຫາຍ ວັນນະໄຊ ຊາດຕະກູນ
10. ສະຫາຍ ພົນຈັດຕະວາ ສອນໄຊ ຈັນຍາລາດ
11. ສະຫາຍ ທະນົງໄຊ ຄຸດໄພທູນ
12. ສະຫາຍ ນາງ ມີນາ ສີວິໄລ
13. ສະຫາຍ ບຸນທະວີ ສໍສຸກັນ
14. ສະຫາຍ ພົນຈັດຕະວາ ສຸລິໄຊ ພິຈິດ
15. ສະຫາຍ ອາຄົມເດດ ວົງໄຊ

ກອງປະຊຸມຄັ້ງປະຖົມມະລຶກຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XII ໄດ້ເລືອກຕັ້ງກົມການເມືອງສູນກາງພັກ ຈຳນວນ 13 ສະຫາຍ, ຍິງ 1 ສະຫາຍ ຄື:

1. ສະຫາຍ ທອງລຸນ ສີສຸລິດ
2. ສະຫາຍ ໄຊສົມພອນ ພົມວິຫານ
3. ສະຫາຍ ສອນໄຊ ສີພັນດອນ
4. ສະຫາຍ ຄຳພັນ ພົມມະທັດ
5. ສະຫາຍ ກິແກ້ວ ໄຂຄຳພິທູນ
6. ສະຫາຍ ພົນເອກ ວິໄລ ຫຼ້າຄຳຟອງ
7. ສະຫາຍ ນາງ ສີໃສ ລືເດດມູນສອນ
8. ສະຫາຍ ສະເຫຼີມໄຊ ກົມມະສິດ
9. ສະຫາຍ ຄຳພັນ ເຜີຍຍະວົງ
10. ສະຫາຍ ທອງສະລິດ ມັງໜໍ່ເມກ
11. ສະຫາຍ ເພັດ ພົມພິພັກ
12. ສະຫາຍ ພົນໂທ ຄຳລຽງ ອຸທະໄກສອນ
13. ສະຫາຍ ວັນໄຊ ພອງສະຫວັນ

ເລືອກເອົາຄະນະເລຂາທິການສູນກາງພັກ 11 ສະຫາຍ, ຍິງ 4 ສະຫາຍ ຄື:

1. ສະຫາຍ ທອງລຸນ ສີສຸລິດ
2. ສະຫາຍ ພົນເອກ ວິໄລ ຫຼ້າຄຳຟອງ
3. ສະຫາຍ ນາງ ສີໃສ ລືເດດມູນສອນ
4. ສະຫາຍ ເພັດ ພົມພິພັກ
5. ສະຫາຍ ວັນໄຊ ພອງສະຫວັນ
6. ສະຫາຍ ອະນຸພາບ ຕູນາລົມ
7. ສະຫາຍ ນາງ ສູນທອນ ໄຊຍະຈັກ
8. ສະຫາຍ ນາງ ວຽງທອງ ສີພັນດອນ
9. ສະຫາຍ ນາງ ບຸນຄຳ ວໍລະຈິດ
10. ສະຫາຍ ພົນໂທ ວັນທອງ ກອງມະນີ
11. ສະຫາຍ ພົນໂທ ວົງສອນ ອິນປານພົມ

ກອງປະຊຸມຄັ້ງປະຖົມມະລຶກຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XII ໄດ້ເລືອກຕັ້ງເອົາສະຫາຍ ພົນເອກ ວິໄລ ຫຼ້າຄຳຟອງເປັນຜູ້ປະຈຳການຄະນະເລຂາທິການສູນກາງພັກ; ເລືອກເອົາສະຫາຍ ວັນໄຊ ພອງສະຫວັນ ເປັນປະທານຄະນະກວດກາສູນກາງພັກ ແລະ ເລືອກຮອງປະທານຄະນະກວດກາສູນກາງພັກ ຈຳນວນ 6 ສະຫາຍ, ຍິງ 1 ສະຫາຍ ຄື:

1. ສະຫາຍ ຄຳໄຫຼ ສີປະເສີດ
2. ສະຫາຍ ນາງ ປິ່ງຄຳ ລາຊະສິມມາ
3. ສະຫາຍ ສຸກຄຳເພັດ ເຮືອງບຸດສີ
4. ສະຫາຍ ຄຳສຸກ ອອຍຍະວົງ
5. ສະຫາຍ ຊົມຊື່ນ ໄຊເກີຍາຈົ່ງຕົວ
6. ສະຫາຍ ກົງໃຈ ວິໄລສັກ.

ເຝົ້າໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ລະວັງ ເອໄອ (AI) ຈະທຳລາຍພາສາ

ຂ່າວຕາມຫົວຂໍ້ທີ່ຕັ້ງຂຶ້ນນີ້ ມາຈາກປະເທດ ໄອສະແລນ ຫຼື ອິດສະລັງ ຢູ່ເຂດເອີຣົບເໜືອສຸດໆ, ເປັນເລື່ອງຄວາມກັງວົນໃຈຂອງຜູ້ໃຫຍ່ໄມສູງທ່ານໜຶ່ງຂອງປະເທດນີ້ ທີ່ເຫັນວ່າ ຖ້າບໍ່ມີມາດຕະການປ້ອງກັນໄວ້ແຕ່ຫົວທີ, ປັນຍາປະດິດ ຫຼື AI ນີ້ ກໍຈະສາມາດທຳລາຍພາສາຂອງຊາດໄດ້; ນອກຈາກຂ່າວຕາມຫົວຂໍ້ບົດນີ້ແລ້ວ, ກໍຍັງມີເລື່ອງຂໍ້ຫ້າມທີ່ທາງການອິດສະຕຣາລີ ວາງອອກໃສ່ນັກສຶກສາຕ່າງປະເທດ ທີ່ຢູ່ໃນໄລຍະກຽມຈົບກັບຄືນປະເທດຂອງພວກເຂົາ ພາຍຫຼັງສຳເລັດການສຶກສາ.

ມາເຂົ້າເລື່ອງທີໜຶ່ງຈາກປະເທດໄອສະແລນ ທີ່ຟັງເບິ່ງແລ້ວອ່າວແປກຫູ ເພາະວ່າສັງຄົມຍຸກດິຈິຕອນນີ້ ໃຜໆກໍຍົກໂປ້ໃຫ້ AI ວ່າເປັນເຕັກໂນໂລຊີລ້ຳຍຸກ, ຊ່ວຍບຸກທະລຸທຸກບັນຫາທີ່ມະນຸດຕ້ອງການ ເວົ້າງ່າຍໆກໍຄື AI ຖືກຖືວ່າເປັນຜູ້ມີລິດເດດຂີ່ມ້າຂາວມາໂຜດມະນຸດໃນທຸກໆມິຕິຊີວິດ; ແຕ່ແລ້ວເວລາຜ່ານໄປບໍ່ພໍເທົ່າໃດ, ມວນມະນຸດກໍແນມເຫັນເງົາມືດຂອງ AI ທີ່ເຊື່ອງຊ້ອນຄວາມເປັນອັນຕະລາຍໄວ້ ຖ້ານຳມັນບໍ່ທັນ. ດັ່ງນັ້ນ, ຈຶ່ງບໍ່ແປກທີ່ມີຂ່າວອອກມາຈົນລົ້ນຮູຫູກ່ຽວກັບກອງປະຊຸມລະດັບປະເທດ, ພາກພື້ນ ແລະ ສາກົນ ທີ່ລົງເລິກມາດຕະການທາງກົດໝາຍ ເພື່ອຄວບຄຸມ AI ບໍ່ໃຫ້ຖືກໃຊ້ໄປໃນທາງແຕກປອກນອກທາງເຊັ່ນ: ມາດຕະການປ້ອງກັນບໍ່ໃຫ້ໃຊ້ AI ໃນບາງລັກສະນະທາງທະຫານ, ການໃຊ້ AI ໃນການລອກລຽນສຽງ ແລະ ຮູບພາບມະນຸດ ເພື່ອເປົ້າໝາຍບໍ່ດີ ເຊັ່ນ: ເລື່ອງປອມແປງແຕ່ງແຕ້ມ ໃຫ້ຄົນຫຼົງເຊື່ອ ແລະ ອື່ນໆ ເພາະ AI ເຮັດໃຫ້ຫຍຸ້ງຍາກໃນການແຍກລະຫວ່າງຂ່າວປອມ ແລະ ຂ່າວຈິງ.

ຂໍກ້ຽວເຂົ້າເລື່ອງທີ່ເປັນຂ່າວອອກມາຈາກປະເທດ ໄອສະແລນ ຫວ່າງບໍ່ເທິງມານີ້ທີ່ບອກວ່າ: ທ່ານ ນາງ ແຄັດຕຼິນ ຈາກອບສະດ໊ອດຕີ (Katrin Jakobsdottir) ອະດີດນາຍົກລັດຖະມົນຕີ ໄອສະແລນ (ໃນປັດຈຸບັນກຳລັງກຽມລົງສະໝັກເປັນປະທານາທິບໍດີ) ໄດ້ອອກມາສະແດງຄວາມເປັນຫ່ວງຢ້ານພາສາໄອສະແລນ ຖືກ AI ກືນກິນໃນຊົ່ວຊີວິດໜຶ່ງຂອງຄົນເຮົາ.; ທ່ານໄດ້ເວົ້າຕື່ມວ່າ ໃນປັດຈຸບັນການນຳໃຊ້ພາສາແຫ່ງຊາດຂອງໄອສະແລນ ພວມມີການປ່ຽນແປງແບບທົບສອກ, ການປ່ຽນແປງນີ້ເກີດຈາກ AI ແລະ ອິດທິພົນຂອງພາສາອັງກິດ ແຕ່ທ່ານບໍ່ໄດ້ເວົ້າລະອຽດວ່າຈະມີວິທີປ້ອງກັນແນວໃດ. ແນ່ນອນພາສາ AI ນັ້ນມີການແຕ້ມແຕ່ງແປງດັດ ດ້ວຍເຕັກໂນໂລຊີອັດສະລິຍະ ແລະ ພາສາທີ່ມາທຽບຄູ່ກັບເຕັກໂນໂລຊີລ້ຳຍຸກນີ້ກໍຄືພາສາອັງກິດນັ້ນແລ.

ເລື່ອງຕໍ່ໄປແມ່ນຂ່າວກ່ຽວກັບຂໍ້ຫ້າມຈາກສຳນັກງານຕຳຫຼວດອິດສະຕຣາລີ ທີ່ອອກມາຫວ່າງບໍ່ດົນມານີ້ (ຂ່າວໜັງສືພິມວຽງຈັນທາມ 20 ພະຈິກ 2025) ເປັນຂໍ້ຫ້າມສະເພາະນັກສຶກສາຕ່າງປະເທດ ທີ່ຢູ່ໃນໄລຍະລໍຖ້າກັບຄືນປະເທດ ພາຍຫຼັງສຳເລັດການສຶກສາ, ອິດສະຕຣາລີ ເປັນປະເທດໜຶ່ງທີ່ນັກສຶກສາຈາກທົ່ວໂລກເລືອກໄປຮຽນຕໍ່ ລວມທັງນັກສຶກສາລາວ;ໃນຊຸມປີຫຼັງໆມານີ້ ທາງການອິດສະຕຣາລີໄດ້ມີມາດຕະການເຄັ່ງຄັດຂຶ້ນຕື່ມເພື່ອຄວບຄຸມບັນຫາທີ່ເກີດຈາກການເພີ່ມຂຶ້ນຂອງນັກສຶກສາຕ່າງປະເທດ ເຊິ່ງພາໃຫ້ລາຄາເຊົ່າທີ່ພັກເພີ່ມຂຶ້ນ ແລະ ບັນຫາອື່ນໆ. ສ່ວນຂໍ້ຫ້າມທີ່ພວມເວົ້າເຖິງນີ້ ແມ່ນຫ້າມນັກສຶກສາຕ່າງປະເທດ ຂາຍບັນຊີທະນາຄານ, ບັດປະຈຳໂຕ ກໍຄືເອກະສານຢັ້ງຢືນຕົວຕົນຂອງພວກເຂົາ ໃຫ້ກຸ່ມອາຊະຍາກອນທີ່ເຄື່ອນໄຫວລະເມີດກົດໝາຍອິດສະຕຣາລີ, ອາຊະຍາກອນເຫຼົ່ານີ້ ມີເປົ້າໝາຍຊອກຊື້ບັນຊີທະນາຄານ ກໍຄືເອກະສານຢັ້ງຢືນຕົວຕົນຂອງນັກສຶກສາ ທີ່ພວມກຽມໂຕກັບຄືນປະເທດ;ບັນຊີທະນາຄານແລະເອກະສານທີ່ກ່າວມານັ້ນ ຈະຊ່ວຍໃຫ້ພວກອາຊະຍາກອນ ເຂົ້າເຖິງທະນາຄານ ແລະ ສະຖານທີ່ທາງການຕ່າງໆຂອງອິດສະຕຣາລີ, ທາງການອິດສະຕຣາລີ ຖືວ່າການຂາຍເອກະສານດັ່ງກ່າວໃຫ້ກຸ່ມອາຊະຍາກອນ ນັ້ນ ແມ່ນເປັນການສົມຮູ້ຮ່ວມຄິດໃນການກະທຳຄວາມຜິດ ເຊິ່ງຈະມີໂທດຕາມກົດໝາຍ.

ທະນາຄານພັດທະນາລາວ
LDB Bank




*#ບ່າວກະບື*

**ຜົວ:** "ມື້ນີ້ອ້າຍໄດ້ເຫັນຄົນທີ່ໂງ່ຈ້າທີ່ສຸດໃນໂລກ"

**ເມຍ:** "ບໍ່ແມ່ນອ້າຍໄປຢືນຢູ່ໜ້າແວ່ນຫອະຫັ້ນ?"

*#BAOKBU*

**HUSBAND:** "Today I have seen the most foolish man in the world"

**WIFE:** "Did you stand in front of the mirror?"



## ສະແດງ...

(ຕໍ່ຈາກໜ້າ 1)

(ສພຊ) - ງານສະແດງສິລະປະແບບພິເສດ ເພື່ອຂໍ່ານັບຊົມເຊີຍຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ແລະ ລະນຶກເຖິງວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ ພາຍໃຕ້ຫົວຂໍ້ "ລາວ-ຫວຽດນາມ ບົດເພງແຫ່ງມິດຕະພາບ" ຈັດຂຶ້ນໃນວັນທີ 9 ມັງກອນຜ່ານມາ ທີ່ສະໜາມກິລາແຫ່ງຊາດ ຫຼັກ 16 ນະຄອນຫຼວງວຽງຈັນ (ນວ) ໂດຍໃຫ້ກຽດເຂົ້າຮ່ວມຂອງສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ພ້ອມດ້ວຍພັນລະຍາ; ສະຫາຍ ຫງວຽນ ວັນ ຮຸ່ງ ກຳມະການສູນກາງພັກກອມມູນິດຫວຽດນາມ, ລັດຖະມົນຕີກະຊວງວັດທະນະທຳ,ກິລາແລະທ່ອງທ່ຽວ; ບັນດາການນຳແລະອະດີດການນຳຂັ້ນສູງຂອງພັກ-ລັດ, ທູຕານຸທູດ, ພະນັກງານ-ທະຫານ-ຕຳຫຼວດ ແລະ ປະຊາຊົນຊາວ ນວ ແລະ ຊາວຫວຽດນາມ ພ້ອມດ້ວຍຄະນະນັກສະແດງສິລະປະວັນນະຄະດີ ລາວ-ຫວຽດນາມ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ສະຫາຍ ນາງ ສວນສະຫວັນ ວິຍະເກດ ກຳມະການສູນກາງພັກ, ລັດຖະມົນຕີກະຊວງວັດທະນະທຳ ແລະ ການທ່ອງທ່ຽວ (ວທ) ກ່າວວ່າ: ເພື່ອຂໍ່ານັບຊົມເຊີຍຜົນສຳເລັດການຈັດຕັ້ງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ທີ່ຫາກໍປິດລົງໃນວັນທີ 8 ມັງກອນຜ່ານມານີ້ກໍຄືໄລຍະດຽວກັນກັບການສ້າງຂະບວນການຕ້ອນຮັບກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີXIV ຂອງພັກກອມມູນິດຫວຽດນາມ ທີ່ຈະເປີດຂຶ້ນໃນທ້າຍເດືອນມັງກອນ2026ຢ່າງເປັນຂະບວນຟົດຟື້ນ ເຊິ່ງແມ່ນໃນໄລຍະທີ່ປະຊາຊົນສອງຊາດ ລາວ-ຫວຽດນາມ ພວມເບີກບານມ່ວນຊື່ນ ແລະ ພ້ອມກັນຢືນຢັນຕໍ່ຄວາມສຳຄັນ, ຄວາມໝາຍຍຸດທະສາດ ຂອງສາຍພົວພັນ ລາວ-ຫວຽດນາມ, ຫວຽດນາມ-ລາວ ເຖິງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ,ການຮ່ວມມືຮອບດ້ານແລະຫຸ້ນສ່ວນຍຸດທະສາດ ກໍຄື 64 ປີ ແຫ່ງການສ້າງຕັ້ງສາຍພົວພັນທາງການທູດ ແລະ 49 ປີ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງຊາດ ລາວ-ຫວຽດນາມ. ງານສະແດງສິລະປະຄັ້ງນີ້, ບໍ່ພຽງແຕ່ເປັນງານສິລະປະບັນເທີງທົ່ວໄປແຕ່ຄື"ບົດເພງປະຫວັດສາດ"ເປັນການຢັ້ງຢືນວ່າຈາກ"ຊຸມຄອງສູ້ຮົບດຽວກັນ" ໃນສະໄໝຕໍ່ສູ້ກູ້ຊາດ ມາສູ່ຍຸກສະໄໝໃໝ່ແຫ່ງການສ້າງສາພັດທະນາ, ສອງຊາດພວກເຮົາຍັງຄົງຈັບມືກັນກ້າວໄປຂ້າງໜ້າຢ່າງໝັ້ນຄົງ ດ້ວຍການ "ເຊື່ອມຈອດທາງຍຸດທະສາດ" ທັງທາງດ້ານເສດຖະກິດ, ຄົມມະນາຄົມ ແລະ ວັດທະນະທຳ ເພື່ອນຳເອົາຄວາມຜາສຸກມາສູ່ປະຊາຊົນທັງສອງປະເທດ.

ລັດຖະມົນຕີກະຊວງວທ ໄດ້ຕາງໜ້າການນຳພັກ-ລັດແລະປວງຊົນລາວບັນດາເຜົ່າ ສະແດງຄວາມຂອບອົກຂອບໃຈຕໍ່ການສະໜັບສະໜູນຊ່ວຍເຫຼືອເຊິ່ງກັນແລະກັນຢ່າງໝົດຈິດໝົດໃຈຂອງເພື່ອນຫວຽດນາມຖານອ້າຍນ້ອງທີ່ດີຕະຫຼອດໄລຍະຜ່ານມາ. ສາມາດຢືນຢັນວ່າສາຍພົວພັນ ລາວ-ຫວຽດນາມ ເປັນມໍລະດົກອັນລ້ຳຄ່າຂອງສອງຊາດ, ເປັນປັດໄຈພາວະວິໄສ, ເປັນກົດເກນປະຫວັດສາດແລະເປັນກຳລັງແຮງອັນໃຫຍ່ຫຼວງຂອງສອງພັກ,ສອງລັດທີ່ຕ້ອງໄດ້ຮັບການເສີມຂະຫຍາຍ, ສືບຕໍ່ໃຫ້ບັນດາຄົນຮຸ່ນໜຸ່ມຕໍ່ໄປ; ເຊື່ອໝັ້ນວ່າເຫດການສຳຄັນທາງວັດທະນະທຳຂອງສອງປະເທດໃນຄັ້ງນີ້ ໄດ້ປະກອບສ່ວນສຳຄັນເປັນບາດກ້າວກະໂດດໃຫ້ການພັດທະນາສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານແລະຫຸ້ນສ່ວນຍຸດທະສາດ ລາວ-ຫວຽດນາມ, ຫວຽດນາມ-ລາວ ໝັ້ນຄົງຂະນົງແກ່ນ ແລະ ສົດໃສດັ່ງດອກບົວທອງ ແລະ ດອກຈຳປາ ຕະຫຼອດການະນານ.

ລາຍການສະແດງສິລະປະພິເສດ ລາວ-ຫວຽດນາມ ຄັ້ງນີ້ປະກອບມີບັນດາລາຍການສະແດງທີ່ສວຍງາມ ແລະ ຍິ່ງໃຫຍ່ ໄດ້ລວບລວມເອົາເລື່ອງລາວໃນປະຫວັດສາດ ແລະ ປັດຈຸບັນ ທີ່ສະທ້ອນໃຫ້ເຫັນເຖິງຄວາມຜູກພັນທີ່ໃກ້ຊິດ ແລະ ບໍ່ສາມາດແຍກອອກຈາກກັນໄດ້ລະຫວ່າງປະຊາຊົນສອງຊາດ ລາວ ແລະ ຫວຽດນາມ ເຊິ່ງສິ່ງເຫຼົ່ານີ້ບໍ່ເປັນພຽງແຕ່ເລື່ອງລາວໃນອະດີດ, ແຕ່ຍັງເປັນການຢືນຢັນບໍ່ວ່າປັດຈຸບັນ ຫຼື ອະນາຄົດ: ຊາຕາກຳຂອງສອງຊາດ ລາວ-ຫວຽດນາມ ເຊື່ອມໂຍງກັນຢ່າງໃກ້ຊິດ, ປະສານກົມກຽວເພື່ອສັນຕິພາບ, ເອກະລາດ, ການພັດທະນາແລະຄວາມຈະເລີນຮຸ່ງເຮືອງສີວິໄລຂອງສອງຊາດ ລາວ-ຫວຽດນາມ ໃນຕໍ່ໜ້າ ໃຫ້ແໜ້ນແຟ້ນຂຶ້ນໄປເລື້ອຍໆ.

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພິດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອນສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ